**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 0110 /ກສ

ນະຄອນຫຼວງວຽງຈັນ, ລົງວັນທີ 15 JAN 2026

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 2324/ກປມ, ລົງວັນທີ 23 ຕຸລາ 2025;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 4195/ຫກ, ລົງວັນທີ 30 ທັນວາ 2025.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການປຸງແຕ່ງ ເຄື່ອງປ່າຂອງດົງ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຍົກລະດັບການຄຸ້ມຄອງ ຕິດພັນກັບການປົກປັກຮັກສາປ່າໄມ້, ການພັດທະນາຊົນນະບົດ, ສ້າງລາຍຮັບ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນບັນດາເຜົ່າ ພ້ອມທັງ ສະໜອງເຄື່ອງປ່າຂອງດົງ ເຂົ້າໃນໂຮງງານປຸງແຕ່ງ ໃຫ້ກາຍເປັນສິນຄ້າ ຈຳໜ່າຍພາຍໃນ ແລະ ສົ່ງອອກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ**

ການຄຸ້ມຄອງເຄື່ອງປ່າຂອງດົງ ແມ່ນ ການຈັດຕັ້ງປະຕິບັດກິດຈະການຕ່າງໆ ໃນການຄຸ້ມຄອງເຄື່ອງປ່າຂອງດົງ ຢູ່ໃນເຂດປ່າທຳມະຊາດ ແລະ ເຂດປູກ ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

ການປຸງແຕ່ງເຄື່ອງປ່າຂອງດົງ ແມ່ນ ການນຳເອົາວັດຖຸດິບ ເຄື່ອງປ່າຂອງດົງ ຈາກເຂດປ່າທຳມະຊາດ ແລະ ເຂດປູກ ເພື່ອນຳມາປຸງແຕ່ງເປັນຜະລິດຕະພັນ ສຳເລັດຮູບ ແລະ ເຄິ່ງສຳເລັດຮູບ ທີ່ຜ່ານຂະບວນການປຸງແຕ່ງຢູ່ໃນໂຮງງານ ໃຫ້ຖືກຕ້ອງຕາມມາດຕະຖານ ແລະ ເປັນມິດກັບສິ່ງແວດລ້ອມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ** ໝາຍເຖິງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຊະນິດທີ່ເປັນເຄື່ອງອຸປະໂພກ, ຊະນິດທີ່ເປັນອາຫານ ທີ່ເກີດຕາມລະດູການ ແລະ ຊະນິດທີ່ເປັນຢາ ທີ່ນຳວັດຖຸດິບ ຈາກທຳມະຊາດ

ແລະ ຈາກການປູກ ມາປຸງແຕ່ງໃຫ້ເປັນຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນ;

2. **ກຸ່ມປຸງແຕ່ງເຄື່ອງປ່າຂອງດົງ** ໝາຍເຖິງ ການຈັດຕັ້ງລວມໝູ່ ທີ່ມີອາຊີບທັດຖະກຳ, ຄ້າຂາຍເຄື່ອງປ່າຂອງດົງ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ ລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ ການບໍລິການ;

3. **ສາງເກັບເຄື່ອງປ່າຂອງດົງ** ໝາຍເຖິງ ສະຖານທີ່ເກັບຊື້, ທ້ອນໂຮມ ເຄື່ອງປ່າຂອງດົງ ເພື່ອຊື້ ຂາຍ ແລະ ສາມາດຕິດຕັ້ງເຄື່ອງຈັກໄດ້ ບໍ່ເກີນ 10 ແຮງມ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄຸ້ມຄອງເຄື່ອງປ່າຂອງດົງ ຢູ່ ສປປ ລາວ.

## ໝວດທີ 2
## ການຄຸ້ມຄອງເຄື່ອງປ່າຂອງດົງ

**ມາດຕາ 5 ການຄຸ້ມຄອງເຄື່ອງປ່າຂອງດົງ**

ການຄຸ້ມຄອງເຄື່ອງປ່າຂອງດົງ ປະກອບດ້ວຍ ກິດຈະການ ດັ່ງນີ້:

1. ການສຳຫຼວດ ແລະ ຈັດສັນ ເຄື່ອງປ່າຂອງດົງ;
2. ການເຊົ່າ ຫຼື ສຳປະທານ ທີ່ດິນປ່າໄມ້ ເພື່ອການປູກ ແລະ ຟື້ນຟູ ເຄື່ອງປ່າຂອງດົງ;
3. ການກຳເບ້ຍເຄື່ອງປ່າຂອງດົງ;
4. ການປູກ ແລະ ການຟື້ນຟູ ເຄື່ອງປ່າຂອງດົງ;
5. ການຂຶ້ນທະບຽນ ແລະ ຢັ້ງຢືນ ເຄື່ອງປ່າຂອງດົງ;
6. ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ເຄື່ອງປ່າຂອງດົງ;
7. ການນຳໃຊ້ເຄື່ອງປ່າຂອງດົງ;
8. ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ;
9. ການສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ;
10. ການອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ;
11. ການຂຸດຄົ້ນເຄື່ອງປ່າຂອງດົງ;
12. ການຊື້ ຂາຍ ເຄື່ອງປ່າຂອງດົງ;
13. ການເຄື່ອນຍ້າຍເຄື່ອງປ່າຂອງດົງ;
14. ການນຳເຂົ້າ ແລະ ສົ່ງຜ່ານ ເຄື່ອງປ່າຂອງດົງ;
15. ການສົ່ງອອກເຄື່ອງປ່າຂອງດົງ;
16. ການຄົ້ນຄວ້າທົດລອງເຄື່ອງປ່າຂອງດົງ;
17. ຂໍ້ມູນ ຂ່າວສານ ເຄື່ອງປ່າຂອງດົງ.

**ມາດຕາ 6 ການສຳຫຼວດ ແລະ ຈັດສັນ ເຄື່ອງປ່າຂອງດົງ**

ການສຳຫຼວດເຄື່ອງປ່າຂອງດົງ ແມ່ນ ການເກັບກຳຂໍ້ມູນ ກ່ຽວກັບຊະນິດພັນ, ຈຳນວນ ແລະ ປະລິມານ ໃນການປະເມີນຄວາມໜາແໜ້ນ ລວມທັງການປ່ຽນແປງການນຳໃຊ້ເຄື່ອງປ່າຂອງດົງ ເພື່ອດຳເນີນການຈັດສັນ.

ການຈັດສັນເຂດ ປູກ ແລະ ຟື້ນຟູ ເຄື່ອງປ່າຂອງດົງ ສາມາດດຳເນີນໃນເຂດປ່າຊຸດໂຊມ ແລະ ທີ່ດິນປອກໂຫຼ້ນ ໃນເຂດທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຈັດສັນໃຫ້ ຫຼື ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ໃຫ້ສິດນຳໃຊ້ທີ່ດິນ.

**ມາດຕາ 7 ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າໄມ້ ເພື່ອການປູກ ແລະ ຟື້ນຟູ ເຄື່ອງປ່າຂອງດົງ**

ການເຊົ່າ ຫຼື ສໍາປະທານ ທີ່ດິນປ່າໄມ້ ເພື່ອການປູກ ແລະ ຟື້ນຟູ ເຄື່ອງປ່າຂອງດົງ ເພື່ອຈຸດປະສົງທາງດ້ານການຄ້າ ໃຫ້ດໍາເນີນໃນເຂດ ທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ທີ່ຢູ່ໃນປ່າຜະລິດ ຕາມແຜນຈັດສັນ ແລະ ປະຕິບັດຕາມຂອບເຂດສິດອະນຸຍາດ ດັ່ງນີ້:

1. ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ອະນຸຍາດເນື້ອທີ່ ແຕ່ ໜຶ່ງຮ້ອຍ ຫາ ສິບພັນ ເຮັກຕາ ຕໍ່ ໜຶ່ງໂຄງການລົງທຶນ ໃນກໍານົດໄລຍະເວລາບໍ່ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນສາມສິບປີ ຕາມການສະເໜີຂອງກົມປ່າໄມ້ ໂດຍການເຫັນດີເປັນເອກະພາບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ໃນກໍລະນີ ເນື້ອທີ່ຫຼາຍກວ່າ ສິບພັນ ເຮັກຕາ ໃຫ້ສະເໜີລັດຖະບານ ພິຈາລະນາອະນຸຍາດ ຕາມກົດໝາຍ ແລະ ລະບຽບການ;

2. ຄະນະກໍາມະການປົກຄອງ ຂັ້ນແຂວງ ອະນຸຍາດເນື້ອທີ່ຕໍ່າກວ່າ ໜຶ່ງຮ້ອຍ ເຮັກຕາ ລົງມາ ຕໍ່ ໜຶ່ງໂຄງການລົງທຶນ ໃນກໍານົດເວລາບໍ່ເກີນ ຫ້າສິບປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ສູງສຸດບໍ່ໃຫ້ເກີນ ສາມສິບປີ ຕາມການສະເໜີຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ບົນພື້ນຖານຄວາມເປັນເອກະພາບກັບພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຂັ້ນແຂວງ.

**ມາດຕາ 8 ການກ້າເບ້ຍເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຮັບການສົ່ງເສີມໃນການກ້າເບ້ຍເຄື່ອງປ່າຂອງດົງ ຕາມກົດໝາຍ ແລະ ລະບຽບການ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ແລະ ການພັດທະນາ ເຄື່ອງປ່າຂອງດົງ.

**ມາດຕາ 9 ການປູກ ແລະ ການຟື້ນຟູ ເຄື່ອງປ່າຂອງດົງ**

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນການປູກ ແລະ ການຟື້ນຟູ ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ແລະ ຕອບສະໜອງວັດຖຸດິບ ໃຫ້ແກ່ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ດ້ວຍການວາງນະໂຍບາຍທີ່ເໝາະສົມ.

ການປູກເຄື່ອງປ່າຂອງດົງ ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ສາມາດດໍາເນີນໄດ້ໃນເຂດປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູໂດຍທໍາມະຊາດ ຫຼື ທີ່ດິນປ່າປອກໂຫຼ້ນ ທີ່ລັດຈັດສັນໃຫ້ ແລະ ຕ້ອງໄດ້ຮັບການຄຸ້ມຄອງຕາມລະບຽບການ ເຊັ່ນ ການຄັດເລືອກເນື້ອທີ່, ການບຸກເບີກ, ການຄັດເລືອກຊະນິດພັນເຄື່ອງປ່າຂອງດົງ ລວມທັງການນໍາເຂົ້າ, ການເກັບແກ່ນພັນ, ການຜະລິດເບ້ຍ, ການປູກ, ການບົວລະບັດຮັກສາ, ການປ້ອງກັນໄຟ, ພະຍາດໄມ້, ບົ້ງ ແມງ ແລະ ການຂຶ້ນທະບຽນເຄື່ອງປ່າຂອງດົງ ທີ່ປູກ.

ການຟື້ນຟູເຄື່ອງປ່າຂອງດົງ ໃຫ້ດໍາເນີນໃນເຂດປ່າໄມ້ທໍາມະຊາດ ທີ່ມີສະພາບຊຸດໂຊມ ແລະ ເຂດປ່າເຫຼົ່າ ຢູ່ໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ລັດຈັດສັນໃຫ້ ດ້ວຍການປູກເສີມ ຫຼື ບູລະນະໃຫ້ຟື້ນຟູໂດຍທໍາມະຊາດ.

ສໍາລັບ ການປູກ ແລະ ການຟື້ນຟູ ເຄື່ອງປ່າຂອງດົງ ເປັນສິນຄ້າ ໃສ່ເນື້ອທີ່ດິນທີ່ຕົນໄດ້ຮັບສິດນໍາໃຊ້ຢ່າງຖືກຕ້ອງຕາມກົດໝາຍ ສາມາດດໍາເນີນໄດ້ໂດຍບໍ່ຕ້ອງຂໍອະນຸຍາດ.

**ມາດຕາ 10 ການຂຶ້ນທະບຽນ ແລະ ຢັ້ງຢືນ ເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປູກເຄື່ອງປ່າຂອງດົງ ຕ້ອງໄດ້ຂຶ້ນທະບຽນ ນໍາພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຫຼື ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ເຄື່ອງປ່າຂອງດົງທີ່ປູກ ເນື້ອທີ່ຫຼາຍກວ່າ ຫ້າ ເຮັກຕາ ຂຶ້ນໄປ ແມ່ນ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກໃບທະບຽນເຄື່ອງປ່າຂອງດົງ ແລ້ວລາຍງານໃຫ້ກົມປ່າໄມ້ ເປັນແຕ່ລະໄລຍະ;

2. ເຄື່ອງປ່າຂອງດົງທີ່ປູກ ເນື້ອທີ່ ໜຶ່ງພັນຫົກຮ້ອຍຕາແມັດ ຫາ ຫ້າ ເຮັກຕາ ແມ່ນ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ອອກໃບທະບຽນເຄື່ອງປ່າຂອງດົງ ແລ້ວລາຍງານໃຫ້ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນແຕ່ລະໄລຍະ.

ເຄື່ອງປ່າຂອງດົງທີ່ປູກ ເນື້ອທີ່ຕ່ຳກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ ຫຼື ແບບກະແຈກກະຈາຍ ແມ່ນ ຄະນະກຳມະການປົກຄອງຕາແສງ ເປັນຜູ້ອອກໃບຢັ້ງຢືນເຄື່ອງປ່າຂອງດົງ ຕາມກົດໝາຍ ແລະ ລະບຽບການ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນແຕ່ລະໄລຍະ.

**ມາດຕາ 11 ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ເຄື່ອງປ່າຂອງດົງ**

ແຫຼ່ງແນວພັນເຄື່ອງປ່າຂອງດົງ ທີ່ເກີດຂຶ້ນໃນປ່າທຳມະຊາດ ແລະ ປ່າປູກ ທີ່ລັດກຳນົດຂຶ້ນ ເພື່ອຕອບສະໜອງແນວພັນເຄື່ອງປ່າຂອງດົງ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂະຫຍາຍແນວພັນເຄື່ອງປ່າຂອງດົງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ການສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນ ເຄື່ອງປ່າຂອງດົງ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບ ພະແນກການອື່ນ, ຄະນະກຳມະການປົກຄອງຂັ້ນເມືອງ ແລະ ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ ສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນເຄື່ອງປ່າຂອງດົງ ໃນເນື້ອທີ່ຫຼາຍກວ່າ ຫ້າ ເຮັກຕາ ຂຶ້ນໄປ;

2. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ປະສານສົມທົບກັບ ຫ້ອງການອື່ນ ແລະ ຄະນະກຳມະການປົກຄອງຕາແສງ ທີ່ກ່ຽວຂ້ອງ ສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນເຄື່ອງປ່າຂອງດົງ ໃນເນື້ອທີ່ ຫ້າ ເຮັກຕາ ລົງມາ;

3. ຄະນະກຳມະການປົກຄອງຕາແສງ ປະສານສົມທົບກັບ ບ້ານທີ່ກ່ຽວຂ້ອງ ສ້າງ ແລະ ຄຸ້ມຄອງແຫຼ່ງແນວພັນເຄື່ອງປ່າຂອງດົງ ໃນເນື້ອທີ່ ຕ່ຳກວ່າ ໜຶ່ງພັນຫົກຮ້ອຍ ຕາແມັດ.

**ມາດຕາ 12 ການນຳໃຊ້ເຄື່ອງປ່າຂອງດົງ**

ການນຳໃຊ້ເຄື່ອງປ່າຂອງດົງ ໄດ້ຈັດແບ່ງອອກເປັນ ສີ່ ປະເພດ ຄື:

1. ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ ເຊັ່ນ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ, ການທ່ອງທ່ຽວທຳມະຊາດ, ການຮັກສາສິ່ງແວດລ້ອມ, ການປະດັບປະດາ, ການວາງສະແດງ, ເປັນຢາປົວພະຍາດ ແລະ ອື່ນໆ ໃຫ້ເກັບກູ້ຕາມເຂດປ່າໄມ້ ທີ່ໄດ້ຈັດສັນໃຫ້;

2. ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອຄອບຄົວ ແມ່ນ ການນຳໃຊ້ເປັນອາຫານ, ຢາປົວພະຍາດ ແລະ ຊົມໃຊ້ໃນຊີວິດປະຈຳວັນ ຂອງປະຊາຊົນ ໃຫ້ເກັບກູ້ໄດ້ໃນເຂດຄຸ້ມຄອງນຳໃຊ້ຂອງບ້ານ ໂດຍສອດຄ່ອງກັບແຜນຈັດສັນ ແລະ ກົດໝາຍ;

3. ການນຳໃຊ້ເຄື່ອງປ່າຂອງດົງ ຕາມປະເພນີ ແມ່ນ ການຊົມໃຊ້ເຄື່ອງປ່າຂອງດົງ ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖືທີ່ເຄີຍປະຕິບັດກັນມາ ໃນເຂດຄຸ້ມຄອງນຳໃຊ້ຂອງບ້ານ ໂດຍສອດຄ່ອງກົດໝາຍ ແລະ ລະບຽບການ;

4. ການນຳໃຊ້ເຄື່ອງປ່າຂອງດົງ ເພື່ອທຸລະກິດ ແມ່ນ ການນຳໃຊ້ເຂົ້າໃນການທ່ອງທ່ຽວ, ເປັນສະຖານທີ່ພັກຜ່ອນ, ການບໍລິການດ້ານລະບົບນິເວດປ່າໄມ້, ການສະໜອງເຄື່ອງປ່າຂອງດົງ ໃຫ້ແກ່ໂຮງງານປຸງແຕ່ງ ແລະ ເປັນສິນຄ້າ. ສຳລັບການນຳໃຊ້ເຄື່ອງປ່າຂອງດົງ ເພື່ອເປັນສິນຄ້າ ໃຫ້ດຳເນີນໃນເຂດປ່າໄມ້ ທີ່ລັດຈັດສັນໃຫ້, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດເນື້ອທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ມອບສິດນຳໃຊ້ທີ່ດິນ ໃຫ້ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 13 ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ**

ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ແມ່ນ ການເກັບກຳຂໍ້ມູນ ທາງດ້ານຊະນິດ ແລະ ຈຳນວນເຄື່ອງປ່າຂອງດົງ ຢູ່ໃນເຂດທີ່ດິນປ່າໄມ້, ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງໂຄງລ່າງພື້ນຖານ. ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ຢູ່ໃນແຕ່ລະເຂດໃຫ້ປະຕິບັດ ດັ່ງນີ້:

1. ເຂດປ່າຜະລິດ, ເຂດຄຸ້ມຄອງນຳໃຊ້ທີ່ດິນໃນ ປ່າປ້ອງກັນ, ປ່າສະຫງວນ ແລະ ເຂດປ່າຊົມໃຊ້ທີ່ລັດຈັດສັນໃຫ້ ໃຫ້ເກັບກຳຂໍ້ມູນຊະນິດພັນ, ຈຳນວນ ແລະ ປະລິມານ ໂດຍການສຸ່ມຕົວຢ່າງ ສິບສ່ວນຮ້ອຍຂອງເນື້ອທີ່ສະເໜີຂໍສຳຫຼວດທັງໝົດ;

2. ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ເຂດກໍ່ສ້າງໂຄງລ່າງພື້ນຖານ ເກັບກຳຂໍ້ມູນຊະນິດພັນ ແລະ ຈຳນວນ

ໂດຍການສຸ່ມຕົວຢ່າງແຕ່ ໜຶ່ງ ຫາ ສິບສ່ວນຮ້ອຍ ຂອງເນື້ອທີ່ປ່າໄມ້.

ສຳລັບ ເຂດທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລັດມອບສິດໃຫ້ນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ບໍ່ຈຳເປັນຕ້ອງສຳຫຼວດ ແຕ່ຕ້ອງມີໃບທະບຽນ ແລະ ໃບຢັ້ງຢືນ ເຂດປູກເຄື່ອງປ່າຂອງດົງ.

ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ໄດ້ແບ່ງຄວາມຮັບຜິດຊອບ ດັ່ງນີ້:

1. ກົມປ່າໄມ້ ເປັນເຈົ້າການ ປະສານສົມທົບ ກັບພາກສ່ວນອື່ນ ຢູ່ຂັ້ນສູນກາງ ແລະ ຄະນະກຳມະການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ໃນເນື້ອທີ່ແຕ່ ໜຶ່ງຮ້ອຍ ເຮັກຕາ ຂຶ້ນໄປ;

2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນເຈົ້າການ ປະສານສົມທົບກັບພະແນກການອື່ນຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ໃນເນື້ອທີ່ແຕ່ ສາມສິບ ຫາ ຕໍ່າກວ່າ ໜຶ່ງຮ້ອຍ ເຮັກຕາ;

3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການ ປະສານສົມທົບກັບ ຫ້ອງການອື່ນຂັ້ນເມືອງ ແລະ ຄະນະກຳມະການປົກຄອງບ້ານ ທີ່ກ່ຽວຂ້ອງ ດຳເນີນການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ໃນເນື້ອທີ່ ຕໍ່າກວ່າ ສາມສິບ ເຮັກຕາ.

ພາຍຫຼັງ ສຳເລັດການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງ ໃຫ້ດຳເນີນການວິເຄາະຂໍ້ມູນທາງດ້ານຈຳນວນ ແລະ ປະລິມານໃນເນື້ອທີ່ທັງໝົດ ແລ້ວຈຳແນກປະເພດເຄື່ອງປ່າຂອງດົງ ຕາມບັນຊີ I, II ແລະ III ໃຫ້ລະອຽດ, ຈະແຈ້ງ ແລະ ຊັດເຈນ.

ສຳລັບ ການສຳຫຼວດເພື່ອຂຸດຄົ້ນເຄື່ອງປ່າຂອງດົງທີ່ເປັນຢາ ຕ້ອງມີຂະແໜງການສາທາລະນະສຸກ ເຂົ້າຮ່ວມ.

**ມາດຕາ 14 ການສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ**

ການສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ໃຫ້ດຳເນີນສະເພາະ ບັນຊີ I ແລະ II. ສ່ວນ ບັນຊີ III ບໍ່ຈຳເປັນສ້າງແຜນ ແຕ່ຕ້ອງຮັບປະກັນຄວາມຍືນຍົງ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ບັນຊີ I

1) ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການສົມທົບກັບ ຫ້ອງການສາທາລະນະສຸກ ຂັ້ນເມືອງ ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລ້ວລາຍງານຫາ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອສັງລວມຂໍ້ມູນແຜນການຂຸດຄົ້ນທົ່ວແຂວງ;

2) ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນເຈົ້າການ ສົມທົບກັບ ພະແນກສາທາລະນະສຸກ ຂັ້ນແຂວງ ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງເອົາຂໍ້ມູນການລາຍງານ ແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຈັດກອງປະຊຸມປຶກສາຫາລືເປັນເອກະພາບຮ່ວມກັນ. ຫຼັງຈາກນັ້ນ, ສົ່ງໃຫ້ ກົມປ່າໄມ້ ເພື່ອສັງລວມ ກ່ອນວັນທີ 30 ກັນຍາ ຂອງທຸກໆປີ;

3) ກົມປ່າໄມ້ ຄົ້ນຄວ້າ ສັງລວມ ແຜນຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ ໃນຂອບເຂດທົ່ວປະເທດ ແລ້ວລາຍງານຫາ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາກ່ອນນຳສະເໜີລັດຖະບານ ພິຈາລະນາອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ.

2. ການສ້າງແຜນຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ບັນຊີ II

1) ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການສົມທົບກັບ ຫ້ອງການສາທາລະນະສຸກ ຂັ້ນເມືອງ ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລ້ວລາຍງານຫາ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອສັງລວມຂໍ້ມູນແຜນການຂຸດຄົ້ນທົ່ວແຂວງ ກ່ອນວັນທີ 30 ກັນຍາ ຂອງທຸກໆປີ;

2) ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນເຈົ້າການ ສົມທົບກັບ ພະແນກສາທາລະນະສຸກ ຂັ້ນແຂວງ ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ປະຈຳປີ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງເອົາຂໍ້ມູນການລາຍງານ ແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຈັດກອງປະຊຸມປຶກສາຫາລືເປັນເອກະພາບຮ່ວມກັນ. ຫຼັງຈາກນັ້ນ, ນຳສະເໜີປະທານຄະນະກຳມະການປົກຄອງ ຂັ້ນແຂວງ ພິຈາລະນາອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ເປັນຢາ

ປະຈຳປີ. ແຜນດັ່ງກ່າວ ຕ້ອງລາຍງານໃຫ້ກົມປ່າໄມ້ ເປັນແຕ່ລະປີ ເພື່ອສັງລວມໃນຂອບເຂດທົ່ວປະເທດ.

3. ສຳລັບ ແຜນການຂຸດຄົ້ນເຄື່ອງປ່າຂອງດົງ ທີ່ບໍ່ເປັນຢາ ບັນຊີ I ແລະ II ແມ່ນຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງຈາກປ່າທຳມະຊາດ ໂດຍອີງໃສ່ຂໍ້ມູນຜົນການສຳຫຼວດເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ສ່ວນເຄື່ອງປ່າຂອງດົງ ທີ່ຂຸດຄົ້ນຈາກທີ່ດິນທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປູກ ແລະ ຟື້ນຟູ ໂດຍໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນຖືກຕ້ອງແລ້ວ ບໍ່ຈຳເປັນຂໍອະນຸມັດແຜນການຂຸດຄົ້ນ ຈາກລັດຖະບານ ຫຼື ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕາມຂັ້ນຕອນທາງດ້ານວິຊາການ ແຕ່ຕ້ອງໄດ້ລາຍງານຂໍ້ມູນ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຊາບ.

**ມາດຕາ 15 ການອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ປະຈຳປີ ໂດຍອີງໃສ່ແຜນການສະເໜີຂຸດຄົ້ນເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ໂດຍໃຫ້ປະຕິບັດ ດັ່ງນີ້:

1. ເຄື່ອງປ່າຂອງດົງ ບັນຊີ I ແມ່ນກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ປະຈຳປີ ບົນພື້ນຖານການເຫັນດີຂອງລັດຖະບານ. ຈາກນັ້ນ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກແຈ້ງການ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຈັດຕັ້ງປະຕິບັດຕາມການເຫັນດີຂອງລັດຖະບານ ແລະ ອອກໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ ຕາມຄວາມຮັບຜິດຊອບຂອງຕົນ;

2. ເຄື່ອງປ່າຂອງດົງ ບັນຊີ II ແມ່ນພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອະນຸມັດແຜນການຂຸດຄົ້ນ ປະຈຳປີ ບົນພື້ນຖານການເຫັນດີຂອງປະທານຄະນະກຳມະການປົກຄອງ ຂັ້ນແຂວງ. ຫຼັງຈາກນັ້ນ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ອອກໃບອະນຸຍາດຂຸດຄົ້ນ;

3. ເຄື່ອງປ່າຂອງດົງ ບັນຊີ III ສາມາດເກັບກູ້ໄດ້ຕາມລະດູການ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງຮັບປະກັນຄວາມຍືນຍົງ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ສະເໜີ ປະທານຄະນະກຳມະການປົກຄອງ ຂັ້ນແຂວງ ແຕ່ງຕັ້ງຄະນະຮັບຜິດຊອບ ຄຸ້ມຄອງ, ຕິດຕາມ ກວດກາ ເປັນອັນສະເພາະ ເພື່ອຮັບປະກັນ ແລະ ຫຼີກເວັ້ນ ບໍ່ໃຫ້ມີການຂຸດຄົ້ນນອກເຂດອະນຸຍາດ.

**ມາດຕາ 16 ການຂຸດຄົ້ນເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຂຸດຄົ້ນເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ຕ້ອງໄດ້ປະຕິບັດຕາມແຜນການທີ່ໄດ້ຮັບອະນຸມັດ, ເຂດທີ່ໄດ້ອະນຸຍາດຂຸດຄົ້ນ ຕາມມາດຕະຖານເຕັກນິກ ແລະ ຮັບປະກັນຄວາມຍືນຍົງ ຂອງເຄື່ອງປ່າຂອງດົງ ແຕ່ລະຊະນິດ.

ສຳລັບ ການຂຸດຄົ້ນເຄື່ອງປ່າຂອງດົງທີ່ປູກ ແລະ ຟື້ນຟູ ທີ່ໄດ້ຂຶ້ນທະບຽນ ຫຼື ຢັ້ງຢືນຢ່າງຖືກຕ້ອງແລ້ວ, ສາມາດຂຸດຄົ້ນໄດ້ເລີຍ ແຕ່ຕ້ອງປະຕິບັດຕາມຂັ້ນຕອນທາງດ້ານວິຊາການ.

**ມາດຕາ 17 ການຊື້ ຂາຍ ເຄື່ອງປ່າຂອງດົງ**

ເຄື່ອງປ່າຂອງດົງທຸກຊະນິດ ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການຂຸດຄົ້ນ ແລະ ເກັບກູ້ປະຈຳປີ ແມ່ນສາມາດດຳເນີນການ ຊື້ ຂາຍ ທົ່ວໄປ ຫຼື ຂາຍໃຫ້ໂຮງງານປຸງແຕ່ງ ທີ່ໄດ້ມາດຕະຖານ ແນໃສ່ສົ່ງເສີມອຸດສາຫະກຳປຸງແຕ່ງພາຍໃນ ແລະ ຮັບປະກັນຜົນປະໂຫຍດສູງສຸດຂອງ ລັດ ແລະ ປະຊາຊົນ. ສ່ວນເຄື່ອງປ່າຂອງດົງ ທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປູກນັ້ນ ເປັນກຳມະສິດຂອງຜູ້ປູກ ຫຼື ຜູ້ລົງທຶນປູກ.

ສຳລັບ ການຊື້ ຂາຍ ເຄື່ອງປ່າຂອງດົງ ທີ່ນອນໃນບັນຊີພືດເປັນຢາ ຕ້ອງຂໍອະນຸຍາດຈາກຂະແໜງການສາທາລະນະສຸກ.

**ມາດຕາ 18 ການເຄື່ອນຍ້າຍເຄື່ອງປ່າຂອງດົງ**

ການເຄື່ອນຍ້າຍເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການ ເຊັ່ນ ຈ່າຍຄ່າທຳນຽມ, ຄ່າຊັບພະຍາກອນທຳມະຊາດ, ອາກອນຕ່າງໆ ແລະ ມີເອກະສານອະນຸຍາດເຄື່ອນຍ້າຍ ຈາກຂະແໜງການກະສິກຳ

ແລະ ສິ່ງແວດລ້ອມ.

ສຳລັບ ການເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ ຕ້ອງໄດ້ຂໍອະນຸຍາດຈາກ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ (ຕາມແບບພິມ ຄດນ).

ການເຄື່ອນຍ້າຍເຄື່ອງປ່າຂອງດົງ ທີ່ນອນໃນບັນຊີພືດເປັນຢາ ຕ້ອງໄດ້ຮັບອະນຸຍາດຈາກ ພະແນກສາທາລະນະສຸກ ຂັ້ນແຂວງ ຕື່ມ ຈຶ່ງສາມາດດຳເນີນການເຄື່ອນຍ້າຍໄດ້.

ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈະເຄື່ອນຍ້າຍເຄື່ອງປ່າຂອງດົງ ຈາກເຂດປູກ ແລະ ຟື້ນຟູ ຕ້ອງໄດ້ຂໍອະນຸຍາດເຄື່ອນຍ້າຍຈາກ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ໂດຍໄດ້ຮັບການຍົກເວັ້ນຄ່າບູລະນະປ່າໄມ້ ແລະ ຄ່າຊົດເຊີຍພະຍາກອນທຳມະຊາດ. ການຂໍອະນຸຍາດເຄື່ອນຍ້າຍແຕ່ລະຄັ້ງ ຕ້ອງມີໃບທະບຽນ ຫຼື ໃບຢັ້ງຢືນເຂດປູກ ເຄື່ອງປ່າຂອງດົງ ຄັດຕິດມາພ້ອມ.

**ມາດຕາ 19 ການນຳເຂົ້າ ແລະ ສົ່ງຜ່ານ ເຄື່ອງປ່າຂອງດົງ**

ລັດ ອະນຸຍາດນຳເຂົ້າເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ເພື່ອຕອບສະໜອງຄວາມຕ້ອງການໃນການຜະລິດຢູ່ພາຍໃນ ດ້ວຍນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມກົດໝາຍ ແຕ່ຕ້ອງໄດ້ຮັບອະນຸຍາດ ຢ່າງຖືກຕ້ອງ ແລະ ມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດຈາກ ກະຊວງການກະສິກຳ ແລະ ສິ່ງແວດລ້ອມ.

ການນຳເຂົ້າເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ຕ້ອງຜ່ານການກວດກາຂອງເຈົ້າໜ້າທີ່ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

ການສົ່ງຜ່ານເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມ ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການນຳເຂົ້າ ແລະ ສົ່ງຜ່ານ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ທີ່ນອນໃນບັນຊີພືດເປັນຢາ ຕ້ອງຂໍອະນຸຍາດນຳ ກະຊວງການສາທາລະນະສຸກ ຕື່ມ.

**ມາດຕາ 20 ການສົ່ງອອກເຄື່ອງປ່າຂອງດົງ**

ການສົ່ງອອກເຄື່ອງປ່າຂອງດົງ ອະນຸຍາດໃຫ້ສະເພາະແຕ່ຊະນິດທີ່ບໍ່ສາມາດປຸງແຕ່ງຢູ່ພາຍໃນ ແລະ ຊະນິດທີ່ບໍ່ຫວງຫ້າມ ໂດຍແມ່ນກະຊວງການກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອະນຸຍາດສົ່ງອອກ. ສຳລັບເຄື່ອງປ່າຂອງດົງ ເປັນຢາ ຍັງຕ້ອງໄດ້ຂໍອະນຸຍາດ ນຳກະຊວງການສາທາລະນະສຸກ ຕື່ມ ຈຶ່ງສາມາດສົ່ງອອກໄດ້.

ການສົ່ງອອກເຄື່ອງປ່າຂອງດົງ ຕ້ອງຂໍໃບອະນຸຍາດສົ່ງອອກ ຈາກພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ (ຕາມແບບພິມ ຄດອ) ພ້ອມທັງປະກອບເອກະສານ ເຊັ່ນ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ, ແຈ້ງການອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ, ໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ, ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ, ໃບແຈ້ງມອບຄ່າຊົດເຊີຍພະຍາກອນທຳມະຊາດ ແລະ ມອບພັນທະອາກອນຕ່າງໆ ຕາມລະບຽບການ.

ການສົ່ງອອກເຄື່ອງປ່າຂອງດົງ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ຕ້ອງປະຕິບັດຕາມ ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 21 ການຄົ້ນຄວ້າທົດລອງເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຄົ້ນຄວ້າທົດລອງ ໃນການຂະຫຍາຍພັນ, ສືບພັນ, ປັບປຸງພັນ, ພັນທຸກຳ ເຄື່ອງປ່າຂອງດົງ, ການຈະເລີນເຕີບໂຕ, ຄຸນປະໂຫຍດ ທາງດ້ານປະລິມານ ແລະ ຄຸນນະພາບ ລວມທັງ ຄົ້ນຄວ້າກຳນົດມາດຕະຖານເຕັກນິກ ທີ່ມີປະສິດທິຜົນໃນການປົກປັກຮັກສາ ແລະ ພັດທະນາ, ຂຶ້ນບັນຊີ, ຈົດທະບຽນເຄື່ອງປ່າຂອງດົງ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງການກະສິກຳ ແລະ ສິ່ງແວດລ້ອມ ແລະ ກະຊວງການກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ມູນ ຂ່າວສານ ເຄື່ອງປ່າຂອງດົງ**

ຂໍ້ມູນ ຂ່າວສານ ເຄື່ອງປ່າຂອງດົງ ແມ່ນ ເອກະສານ ຕົວເລກ, ສະຖິຕິ, ແຜນທີ່, ພາບຖ່າຍທາງອາກາດ, ເຄື່ອງປ່າຂອງດົງ ແລະ ຂໍ້ມູນອື່ນ ກ່ຽວກັບເຄື່ອງປ່າຂອງດົງ ທີ່ເກັບຮັກສາໄວ້ໃນລະບົບຖານຂໍ້ມູນ ດ້ວຍຮູບ

ແບບເອເລັກໂຕຣນິກ, ຫໍສະໝຸດ, ສູນຂໍ້ມູນຂ່າວສານ ແລະ ອື່ນໆ.

ຂໍ້ມູນ ຂ່າວສານ ເຄື່ອງປ່າຂອງດົງ ນໍາໃຊ້ສໍາລັບ ການສຶກສາຄົ້ນຄວ້າ, ການກໍານົດນະໂຍບາຍ, ການສ້າງແຜນຍຸດທະສາດປ່າໄມ້, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ເຄື່ອງປ່າຂອງດົງ ໂດຍມອບໃຫ້ຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ພັດທະນາ, ຄຸ້ມຄອງ, ນໍາໃຊ້ ຢ່າງລວມສູນ ແລະ ໂຄສະນາ ເຜີຍແຜ່ ໃຫ້ສັງຄົມຢ່າງທົ່ວເຖິງ.

## ໝວດທີ 3
## ປະເພດໂຮງງານປຸງແຕ່ງ, ກຸ່ມ ແລະ ສາງເກັບເຄື່ອງປ່າຂອງດົງ

### ມາດຕາ 23 ປະເພດໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໄດ້ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

1. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ;
2. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນອາຫານ ທີ່ເກີດຕາມລະດູການ;
3. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນຢາ.

### ມາດຕາ 24 ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ

ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ແມ່ນ ໂຮງງານແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສໍາເລັດຮູບ ເປັນຜະລິດຕະພັນເຄື່ອງປ່າຂອງດົງ ເຊັ່ນ ຫວາຍ, ໄມ້ປ່ອງ, ປໍສາ, ເປືອກເມືອກ ແລະ ຊະນິດອື່ນ ທີ່ນໍາມາແປຮູບ ຫຼື ປຸງແຕ່ງໃຫ້ກາຍເປັນຜະລິດຕະພັນ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ.

### ມາດຕາ 25 ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນອາຫານທີ່ເກີດຕາມລະດູການ

ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນອາຫານທີ່ເກີດຕາມລະດູການ ແມ່ນ ໂຮງງານແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສໍາເລັດຮູບ ເປັນຜະລິດຕະພັນເຄື່ອງປ່າຂອງດົງ ເຊັ່ນ ເຫັດ, ໝາກຕາວ, ໜໍ່ໄມ້, ໝາກຈອງບານ ແລະ ຊະນິດອື່ນ ສາມາດສະໜອງໃຫ້ແກ່ໂຮງງານປຸງແຕ່ງ ໃຫ້ກາຍເປັນຜະລິດຕະພັນ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ.

### ມາດຕາ 26 ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນຢາ

ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນຢາ ແມ່ນ ໂຮງງານແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສໍາເລັດຮູບ ໂຮງງານແປຮູບຜະລິດຕະພັນທີ່ນໍາເອົາເຄື່ອງປ່າຂອງດົງ ຊະນິດທີ່ເປັນຢາ ເຊັ່ນ ເຄືອແຫມ, ເຄືອໄສ້ຊ້າງ, ເຄືອແດງດ່ານ, ຢາຫົວ ແລະ ຊະນິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງ ວ່າດ້ວຍບັນຊີພືດເປັນຢາ ທີ່ກະຊວງສາທາລະນະສຸກ ກໍານົດໄວ້ໃນແຕ່ລະໄລຍະ ເພື່ອນໍາມາປຸງແຕ່ງໃຫ້ກາຍເປັນຜະລິດຕະພັນ ເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ.

### ມາດຕາ 27 ກຸ່ມປຸງແຕ່ງເຄື່ອງປ່າຂອງດົງ

ລັດ ຊຸກຍູ້ ແລະ ສົ່ງເສີມ ການສ້າງຕັ້ງກຸ່ມປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ມີຄວາມເຂັ້ມແຂງ ເພື່ອນໍາເອົາເຄື່ອງປ່າຂອງດົງ ຈາກທໍາມະຊາດ ແລະ ເຂດປູກ ມາປຸງແຕ່ງໃຫ້ກາຍເປັນຜະລິດຕະພັນເຄື່ອງປ່າຂອງດົງ ເປັນຕົ້ນ ການຈັກສານ, ຄວັດ, ແກະສະຫຼັກ, ຜະລິດຕະພັນອື່ນ ຕາມຄວາມຕ້ອງການຂອງຕະຫຼາດ.

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງກຸ່ມປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງປະກອບເອກະສານ ເຊັ່ນ ໃບຄໍາຮ້ອງ, ບັນຊີລາຍຊື່ສະມາຊິກກຸ່ມ, ບົດບັນທຶກກອງປະຊຸມສ້າງຕັ້ງກຸ່ມ, ກົດລະບຽບຂອງກຸ່ມ, ໂຄງຮ່າງການຈັດຕັ້ງຂອງກຸ່ມ ແລະ ແຜນດໍາເນີນງານຂອງກຸ່ມ ເພື່ອສະເໜີ ຫາ ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຄົ້ນຄວ້າ ພິຈາລະນາອອກໃບອະນຸຍາດສ້າງຕັ້ງກຸ່ມ ບົນພື້ນຖານມີແຫຼ່ງວັດຖຸດິບທີ່ພຽງພໍ.

**ມາດຕາ 28 ສາງເກັບເຄື່ອງປ່າຂອງດົງ**

ສາງເກັບເຄື່ອງປ່າຂອງດົງ ແມ່ນ ສະຖານທີ່ເກັບມ້ຽນ, ທ້ອນໂຮມ, ຊື້ ຂາຍ ເຄື່ອງປ່າຂອງດົງ ທີ່ມີແຫຼ່ງທີ່ມາທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສະເໜີສ້າງຕັ້ງສາງເກັບເຄື່ອງປ່າຂອງດົງ ຕ້ອງປະກອບມີເອກະສານ ເຊັ່ນ ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ, ໃບອະນຸຍາດປຸກສ້າງ ຫຼື ໃບສັນຍາເຊົ່າທີ່ດິນ/ອາຄານ, ໃບຢັ້ງຢືນມອບພັນທະອາກອນ ແລະ ໃບຢັ້ງຢືນແຜນຄຸ້ມຄອງສິ່ງແວດລ້ອມ ເພື່ອສະເໜີຫາ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຄົ້ນຄວ້າເຫັນດີທາງດ້ານຫຼັກການ ເພື່ອພິຈາລະນາອະນຸຍາດສ້າງຕັ້ງ.

ການສ້າງຕັ້ງສາງເກັບເຄື່ອງປ່າຂອງດົງ ແມ່ນ ບໍ່ອະນຸຍາດໃຫ້ຕັ້ງຢູ່ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຢ່າງເດັດຂາດ.

## ໝວດທີ 4
## ຂະໜາດ ແລະ ມາດຕະຖານ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

**ມາດຕາ 29 ຂະໜາດໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ຂະໜາດໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແມ່ນ ອີງໃສ່ກຳລັງແຮງງານລວມຂອງເຄື່ອງຈັກ ແລະ ມູນຄ່າການລົງທຶນທັງໝົດຂອງໂຮງງານ ໂດຍຖືເອົາຕົວເລກແຮງມ້າ ຫຼື ມູນຄ່າການລົງທຶນ ເປັນພື້ນຖານໃນການກຳນົດຂະໜາດໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຊຶ່ງປະກອບມີ ສາມ ຂະໜາດ ດັ່ງນີ້:

1. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດໃຫຍ່ ແມ່ນ ໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກ ແຕ່ 201 ແຮງມ້າ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ສີ່ຕື້ ກີບ ຂຶ້ນໄປ;
2. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ ແມ່ນ ໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກ ແຕ່ 51 ແຮງມ້າ ຫາ 200 ແຮງມ້າ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ໜຶ່ງຕື້ ຫາ ສີ່ຕື້ ກີບ;
3. ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດນ້ອຍ ແມ່ນ ໂຮງງານທີ່ມີກຳລັງແຮງລວມຂອງເຄື່ອງຈັກ ແຕ່ 10 ແຮງມ້າ ຫາ 50 ແຮງມ້າ ຫຼື ມູນຄ່າການລົງທຶນທັງໝົດ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຕື້ ກີບ.

**ມາດຕາ 30 ມາດຕະຖານໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ມາດຕະຖານໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ປະກອບ ມີ ດັ່ງນີ້:

1. ສະຖານທີ່ຕັ້ງ;
2. ອາຄານຜະລິດ ແລະ ສິ່ງປຸກສ້າງ;
3. ເຄື່ອງຈັກ ແລະ ການຕິດຕັ້ງ;
4. ຂະບວນການຜະລິດ;
5. ວິຊາການ ແລະ ກຳມະກອນ;
6. ຄວາມປອດໄພ;
7. ສຸຂານາໄມ;
8. ສິ່ງແວດລ້ອມ;
9. ການບໍລິຫານ.

ການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ແລະ ເປັນຢາ ຕ້ອງປະຕິບັດໃຫ້ໄດ້ມາດຕະຖານໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 31 ຫາ ມາດຕາ 39 ຂອງຂໍ້ຕົກລົງສະບັບນີ້.

ການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງບໍລິໂພກ ຫຼື ເປັນອາຫານ ທີ່ເກີດຕາມລະດູການ ຕ້ອງປະຕິບັດໃຫ້ໄດ້ມາດຕະຖານ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ ໃນ ມາດຕາ 33 ຫາ ມາດຕາ 39 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 31 ມາດຕະຖານສະຖານທີ່ຕັ້ງ**

ມາດຕະຖານສະຖານທີ່ຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ແລະ ເປັນຢາ ຕ້ອງປະຕິບັດ ດັ່ງນີ້:

1. ສ້າງຕັ້ງຢູ່ເຂດ ອຸດສາຫະກໍາ ຫຼື ນິຄົມອຸດສາຫະກໍາ, ເຂດທີ່ດິນທີ່ເປັນກໍາມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແຕ່ບໍ່ອະນຸຍາດໃຫ້ສ້າງຕັ້ງຢູ່ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ຢ່າງເດັດຂາດ;

2. ມີເສັ້ນທາງ ເຂົ້າ-ອອກ ສະດວກ ແລະ ມີເນື້ອທີ່ ທີ່ເໝາະສົມກັບການດໍາເນີນກິດຈະການ ຕາມຂະໜາດ ແລະ ປະເພດໂຮງງານ;

3. ຫ່າງຈາກ ເຂດຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທໍາ, ເຂດອະນຸລັກຊີວະນານາພັນ, ແຫຼ່ງນໍ້າທໍາມະຊາດ.

ມາດຕະຖານສະຖານທີ່ຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 32 ມາດຕະຖານອາຄານຜະລິດ ແລະ ສິ່ງປຸກສ້າງ**

ມາດຕະຖານອາຄານຜະລິດ ແລະ ສິ່ງປຸກສ້າງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ແລະ ບໍລິໂພກ ຕ້ອງປະຕິບັດ ດັ່ງນີ້:

1. ມີ ອາຄານຜະລິດ ທີ່ໄດ້ມາດຕະຖານ ເຊັ່ນ ອາຄານສໍາລັບການຜະລິດ, ສາງ ຫຼື ບ່ອນເກັບມ້ຽນວັດຖຸດິບ, ບ່ອນເກັບມ້ຽນຜະລິດຕະພັນ ແລະ ອາຄານອື່ນ ທີ່ນໍາໃຊ້ເຂົ້າໃນວຽກງານປຸງແຕ່ງເຄື່ອງປ່າຂອງດົງ;

2. ມີ ສິ່ງປຸກສ້າງ ທີ່ໄດ້ມາດຕະຖານ ສໍາລັບການຄຸ້ມຄອງບໍລິຫານ, ອາຄານຫ້ອງອາຫານ, ບ່ອນພັກຜ່ອນ, ບ່ອນຈອດລົດ, ຫ້ອງນໍ້າ, ລະບົບບໍາບັດນໍ້າເປື້ອນ, ບໍາບັດ ແລະ ກໍາຈັດສິ່ງເສດເຫຼືອອື່ນ ແລະ ສິ່ງປຸກສ້າງອື່ນ ທີ່ນໍາໃຊ້ເຂົ້າໃນວຽກງານປຸງແຕ່ງເຄື່ອງປ່າຂອງດົງ;

3. ໂຄງສ້າງອາຄານ ແລະ ສິ່ງປຸກສ້າງ ຕ້ອງແໜ້ນໜາ ແລະ ເໝາະສົມກັບການດໍາເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານໂຮງງານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

4. ຕ້ອງຕິດຕັ້ງ ລະບົບລະບາຍອາກາດ, ລະບົບດູດຝຸ່ນ, ລະບົບໄຟຟ້າ ທີ່ຮັບປະກັນຄວາມປອດໄພ ຕາມມາດຕະຖານທີ່ກໍານົດໄວ້;

5. ຕ້ອງຕິດປ້າຍຊື່ໂຮງງານ, ປ້າຍເຕືອນ, ບັງຄັບ, ເກືອດຫ້າມ, ປ້າຍຊີ້ບອກສະຖານທີ່ປະຕິບັດວຽກງານຕ່າງໆ ຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 33 ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ**

ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງປະຕິບັດ ດັ່ງນີ້:

1. ເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ເຕັກໂນໂລຊີເໝາະສົມຕາມຍຸກສະໄໝ, ຖືກຕ້ອງກັບເປົ້າໝາຍການນໍາໃຊ້, ບໍ່ມີຄວາມສ່ຽງ ຕໍ່ການເກີດຜົນກະທົບ ຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ. ໃນນັ້ນ, ເຄື່ອງຈັກທີ່ຕິດຕັ້ງ ຕ້ອງເປັນເຄື່ອງຈັກທີ່ມີປະສິດທິພາບສູງ, ປະຢັດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດ;

2. ຕິດຕັ້ງເຄື່ອງຈັກ ໃຫ້ຖືກຕ້ອງຕາມລະບົບມາດຕະຖານເຕັກນິກ ແລະ ຖືກຕາມແຜນຜັງການຕິດຕັ້ງເຄື່ອງຈັກ ແລະ ຮັບປະກັນຄວາມປອດໄພໃນເວລານໍາໃຊ້;

3. ຂຶ້ນບັນຊີເຄື່ອງຈັກໃຫ້ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນ ປະເພດເຄື່ອງຈັກ, ຍີ່ຫໍ້, ກໍາລັງແຮງຂອງເຄື່ອງຈັກ;

4. ມີແຜນການຕິດຕາມກວດກາ, ບໍາລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ຢ່າງເປັນປົກກະຕິ.

**ມາດຕາ 34 ມາດຕະຖານຂະບວນການຜະລິດ**

ມາດຕະຖານຂະບວນການຜະລິດ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງປະຕິບັດ ດັ່ງນີ້:

1. ຂະບວນການຜະລິດ ຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງເປັນລະບົບຕ່ອງໂສ້ການຜະລິດທີ່

ເໝາະສົມ ເລີ່ມແຕ່ຂອດນຳວັດຖຸດິບເຂົ້າຜະລິດ ຈົນຮອດຂອດຜະລິດຕະພັນສຸດທ້າຍ, ທຸກຂອດການຜະລິດ ຕ້ອງມີລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ ໃຫ້ໄດ້ມາດຕະຖານທີ່ກຳນົດໄວ້;

2. ຂະບວນການຜະລິດ ຕ້ອງໄດ້ມີການບັນທຶກສິ້ນເຂົ້າ ແລະ ຜະລິດຕະພັນເຄື່ອງປ່າຂອງດົງສົ້ນອອກ ແລະ ສອດຄ່ອງຕາມແຜນການຜະລິດປະຈຳປີ;

3. ພາຍໃນອາຄານ ແລະ ສິ່ງປຸກສ້າງ ໂຮງງານ ຫຼື ບ່ອນເຮັດວຽກ ຕ້ອງບໍ່ມີສິ່ງກີດຂວາງທາງຍ່າງ, ຕ້ອງໃສ່ປ້າຍເຕືອນ, ປ້າຍຊີ້ບອກຂະບວນການຜະລິດຢູ່ແຕ່ລະຂອດງານ ແລະ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ.

**ມາດຕາ 35 ມາດຕະຖານວິຊາການ ແລະ ກຳມະກອນ**

ມາດຕະຖານວິຊາການ ແລະ ກຳມະກອນ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງປະຕິບັດ ດັ່ງນີ້:

1. ມີ ໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ;

2. ຜູ້ທີ່ເປັນຫົວໜ້າ ຫຼື ຮອງຫົວໜ້າ ແຕ່ລະສາຍງານການຜະລິດ ແລະ ຄຸ້ມຄອງບໍລິຫານຂອງໂຮງງານ ຕ້ອງມີປະສົບການທີ່ແນ່ນອນ ຢ່າງໜ້ອຍ ໜຶ່ງຄົນ;

3. ໄດ້ຮັບການຝຶກອົບຮົມຍົກລະດັບທາງດ້ານເຕັກນິກວິຊາການ ທັງພາຍໃນ ຫຼື ຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ;

4. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບເປັນປົກກະຕິ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**ມາດຕາ 36 ມາດຕະຖານຄວາມປອດໄພ**

ມາດຕະຖານຄວາມປອດໄພ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງປະຕິບັດ ດັ່ງນີ້:

1. ມີ ໜ່ວຍງານ ຫຼື ຜູ້ຮັບຜິດຊອບຄວາມປອດໄພໃນໂຮງງານ, ພະນັກງານ ແລະ ກຳມະກອນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພໂຮງງານ;

2. ພະນັກງານ ແລະ ກຳມະກອນ ຜູ້ປະຕິບັດວຽກງານຢູ່ໃນໂຮງງານ ຕ້ອງໃສ່ເຄື່ອງມືອຸປະກອນປ້ອງກັນຄວາມປອດໄພ ໂດຍຂຶ້ນກັບຄວາມຈຳເປັນຂອງແຕ່ລະໜ້າວຽກ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ໝວກກັນກະທົບ, ອຸປະກອນ ປິດປາກ-ປິດດັງ ແລະ ປິດຫູ, ຖົງມື, ເກີບກັນກະທົບ, ຊຸດກັນຄວາມຮ້ອນ, ແວ່ນຕາກັນແສງ ແລະ ຈັດໃຫ້ມີບ່ອນເກັບມ້ຽນເຄື່ອງນຸ່ງ;

3. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກປ້ອງກັນໃສ່ກົງລໍ້ໝູນ, ແຂ້ວເຟືອງ, ສາຍພານ, ສາຍໂສ້ ແລະ ອື່ນໆ;

4. ສະຖານທີ່ ທີ່ເປັນອັນຕະລາຍ ຫຼື ບ່ອນຄວາມສ່ຽງທີ່ຈະເກີດອຸປະຕິເຫດ ຕ້ອງຕິດຕັ້ງ ປ້າຍເຕືອນ, ປ້າຍຫ້າມ, ປ້າຍຊີ້ບອກ ແລະ ແຕ້ມເສັ້ນຂອບເຂດຕ່າງໆ;

5. ຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ໃນໂຮງງານໃຫ້ພຽງພໍ ເປັນຕົ້ນ ລະບົບສັນຍານເຕືອນໄພ ແລະ ປໍ້າມອດໄຟ ຫຼື ລະບົບນໍ້າມອດໄຟ ທີ່ສາມາດນຳໃຊ້ໄດ້;

6. ຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ໃສ່ເຄື່ອງຈັກ, ອາຄານ ແລະ ສິ່ງປຸກສ້າງຂອງໂຮງງານ.

**ມາດຕາ 37 ມາດຕະຖານສຸຂານາໄມ**

ມາດຕະຖານສຸຂານາໄມ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ຕ້ອງປະຕິບັດ ດັ່ງນີ້:

1. ມີ ຜູ້ຮັບຜິດຊອບວຽກງານສຸຂານາໄມ ຢ່າງໜ້ອຍ ໜຶ່ງຄົນ;

2. ມີ ຕູ້ຢາ ແລະ ອຸປະກອນປະຖົມພະຍາບານເບື້ອງຕົ້ນ;

3. ມີ ນໍ້າດື່ມທີ່ສະອາດ ແລະ ລະບົບນຳໃຊ້ນໍ້າ ຢ່າງພຽງພໍ ເປັນຕົ້ນ ນໍ້າປະປາ ຫຼື ນໍ້າບາດານ;

4. ມີ ຫ້ອງນໍ້າ, ບ່ອນລ້າງມື, ນໍ້າຢາຂ້າເຊື້ອ ຫຼື ສະບູ ທີ່ຖືກຫຼັກສຸຂານາໄມ ໃຫ້ພຽງພໍ ແລະ ເໝາະສົມ;

5. ປະຕິບັດມາດຕະການ ປ້ອງກັນການແຜ່ລະບາດເຊື້ອພະຍາດ ຢ່າງເຂັ້ມງວດ.

ສຳລັບ ມາດຕະຖານສຸຂານາໄມ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນອາຫານ ແລະ ທີ່ເປັນຢາ ແມ່ນ ປະຕິບັດຕາມມາດຕະຖານ ຂອງກະຊວງສາທາລະນະສຸກ ກຳນົດ.

**ມາດຕາ 38 ມາດຕະຖານສິ່ງແວດລ້ອມ**

ມາດຕະຖານສິ່ງແວດລ້ອມ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດຕ້ອງປະຕິບັດ ຕ້ອງປະຕິບັດ ດັ່ງນີ້:

1. ກ່ອນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ກ່ອນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

2. ມີມາດຕະການປ້ອງກັນ ແລະ ຄວບຄຸມມົນລະພິດ ທາງດິນ, ອາກາດ, ນໍ້າ ແລະ ສິ່ງລົບກວນ ບໍ່ໃຫ້ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ;

3. ມີລະບົບບໍາບັດ ນໍ້າເປື້ອນ, ບໍາບັດ ແລະ ກໍາຈັດສິ່ງເສດເຫຼືອຈາກໂຮງງານປຸງແຕ່ງເຄື່ອງປ່າຂອງດົງທີ່ໄດ້ມາດຕະຖານ;

4. ມົນລະພິດ ແລະ ສິ່ງເສດເຫຼືອ ທີ່ຈະປ່ອຍອອກຈາກໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງບໍາບັດໃຫ້ຢູ່ໃນເກນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້.

**ມາດຕາ 39 ມາດຕະຖານການບໍລິຫານ**

ມາດຕະຖານການບໍລິຫານ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງປະຕິບັດ ດັ່ງນີ້:

1. ມີ ແຜນການບໍລິຫານໂຮງງານ ແລະ ກົດລະບຽບຂອງໂຮງງານ ໃນການຄຸ້ມຄອງ ແລະ ບໍລິຫານໂຮງງານ;

2. ແຜນຄວາມຕ້ອງການນໍາໃຊ້ເຄື່ອງປ່າຂອງດົງ ແລະ ວັດຖຸປະກອບ ຂອງໂຮງງານປະຈໍາປີ ຕ້ອງຜ່ານການຢັ້ງຢືນ ຈາກຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ;

3. ສ້າງ ຍີ່ຫໍ້, ເຄື່ອງໝາຍການຄ້າ, ກໍານົດມາດຕະຖານຜະລິດຕະພັນ ແລະ ຈົດທະບຽນເຄື່ອງໝາຍການຄ້າ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກໍານົດ.

## ໝວດທີ 5
## ການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

**ມາດຕາ 40 ການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທຸກປະເພດ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ແລ້ວສະເໜີຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ນໍາຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ.

ສໍາລັບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນຢາ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການສາທາລະນະສຸກ ກ່ອນຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ ຈະພິຈາລະນາອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

**ມາດຕາ 41 ເງື່ອນໄຂການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ເປັນເຄື່ອງອຸປະໂພກ ແລະ ເປັນອາຫານ ທີ່ເກີດຕາມລະດູການ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ;

2. ມີ ງົບປະມານການລົງທຶນ, ເຄື່ອງຈັກ, ວັດຖຸປະກອບ ແລະ ພາຫະນະຮັບໃຊ້;

3. ມີ ວິຊາການ, ກໍາມະກອນ ແລະ ຊ່ຽວຊານ ທີ່ມີຄຸນວຸດທິການສຶກສາທີ່ກ່ຽວຂ້ອງກັບໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

4. ມີ ພື້ນທີ່ສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

5. ມີ ພື້ນທີ່ຟື້ນຟູ ແລະ ປູກເຄື່ອງປ່າຂອງດົງ ຢ່າງໜ້ອຍ ຫ້າ ເຮັກຕາ ຂຶ້ນໄປ ເພື່ອຮັບປະກັນໃຫ້ມີແຫຼ່ງວັດຖຸດິບທີ່ພຽງພໍ ແລະ ຖືກຕ້ອງຕາມກົດໝາຍ ໂດຍບໍ່ໃຫ້ອີງໃສ່ວັດຖຸດິບຈາກປ່າທໍາມະຊາດ ເປັນຕົ້ນຕໍ;

6. ມີ ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

7. ເງື່ອນໄຂອື່ນ ທີ່ກ່ຽວຂ້ອງກັບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

**ມາດຕາ 42 ບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການສ້າງບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງທີ່ໄດ້ກຳນົດໄວ້ໃນ ມາດຕາ 46 ຂອງຂໍ້ຕົກລົງສະບັບນີ້.

ບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ສະພາບລວມໂຄງການ
   1) ທີ່ຕັ້ງຂອງໂຄງການ;
   2) ເຫດຜົນການສະເໜີໂຄງການ;
   3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.
2. ເຕັກນິກການກໍ່ສ້າງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ
   1) ສະຖານທີ່ສ້າງຕັ້ງໂຮງງານປຸງແຕ່ເຄື່ອງປ່າຂອງດົງ;
   2) ແຜນການປຸກສ້າງອາຄານໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ອາຄານອື່ນ;
   3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
   4) ແຜນການນຳໃຊ້ວັດຖຸດິບ;
   5) ແຜນອາດຂະບວນການຜະລິດ ແລະ ບົດອະທິບາຍ;
   6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
   7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
   8) ສະຫວັດດີການສັງຄົມຂອງໂຮງງານ;
   9) ສຳເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
   10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກລັດ ຈັດຕັ້ງປະຕິບັດວຽກງານໃນການຊຸກຍູ້, ຕິດຕາມ ກວດກາ.
3. ພາກເສດຖະກິດ
   1) ຕົ້ນທຶນການຜະລິດ;
   2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ຜົນກຳໄລ;
   3) ແຜນການຜະລິດ ແລະ ການຈຳໜ່າຍ;
   4) ແຜນການນຳໃຊ້ແຮງງານ.
4. ຄາດຄະເນຜົນໄດ້ຮັບຈາກໂຄງການ
   1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);
   2) ການວິເຄາະຄວາມສ່ຽງ ໃນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

**ມາດຕາ 43 ເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມແບບພິມ ຮຽດ 01;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ແລະ ໃບຢັ້ງຢືນກຳມະສິດຕໍ່ຊັບສິນ;
4. ສຳເນົາ ສັນຍາເຊົ່າ ຫຼື ສຳປະທານ ທີ່ດິນ/ອາຄານ, ສິ່ງປຸກສ້າງ (ຖ້າມີ);
5. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
6. ສຳເນົາ ໃບຢັ້ງຢືນການມອບອາກອນຕ່າງໆ;
7. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
8. ສຳເນົາ ໃບຢັ້ງຢືນກ່ຽວກັບບົດວິພາກເສດຖະກິດ-ເຕັກນິກ;
9. ສຳເນົາ ໃບອະນຸຍາດປຸກສ້າງ;
10. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ.

**ມາດຕາ 44 ຂັ້ນຕອນການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ຂັ້ນຕອນການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ປະຕິບັດ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ກວດກາ ເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
2. ກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
3. ການພິຈາລະນາສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

**ມາດຕາ 45 ການຮັບຄຳຮ້ອງ ແລະ ກວດກາ ເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ພາຍຫຼັງໄດ້ຮັບເອກະສານ ປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງແລ້ວ, ຜູ້ໄດ້ຮັບຊຸດເອກະສານດັ່ງກ່າວ ຕ້ອງກວດກາຈຳນວນ ແລະ ເນື້ອໃນເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 43 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 46 ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໄດ້ແບ່ງຄວາມຮັບຜິດຊອບຕາມຂັ້ນຄຸ້ມຄອງ ດັ່ງນີ້:

1. ໂຮງງານຂະໜາດໃຫຍ່ ມອບໃຫ້ ກົມປ່າໄມ້ ປະສານສົມທົບກັບ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຂະແໜງການໂຍທາທິການ ແລະ ຂົນສົ່ງ, ຄະນະກຳມະການປົກຄອງຕາແສງ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;

2. ໂຮງງານຂະໜາດກາງ ມອບໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;

3. ໂຮງງານຂະໜາດນ້ອຍ ມອບໃຫ້ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ປະສານສົມທົບກັບ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກ ໂດຍກຳນົດແຈ້ງຈຸດທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານທີ່ກຳນົດໄວ້ໃນມາດຕາ 30 ຂອງຂໍ້ຕົກລົງສະບັບນີ້. ຜູ້ລົງກວດກາ ຕ້ອງລົງລາຍເຊັນໃນບົດບັນທຶກ, ເນື້ອໃນການກວດກາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 47 ການພິຈາລະນາສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ພາຍຫຼັງສຳເລັດ ການກວດກາສະຖານທີ່ຕັ້ງໂຮງງານ ແລະ ມີບົດບັນທຶກການກວດກາໂຮງງານ ທີ່ເຫັນດີໃຫ້ດຳເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກ ຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນເຊັນບົດບັນທຶກການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດໃຫຍ່ ຕາມການສະເໜີຂອງກົມປ່າໄມ້ ໂດຍນຳໃຊ້ ແບບພິມ ຮຽດ 02;

2. ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ ບົນພື້ນຖານການເຫັນດີຂອງປະທານຄະນະກຳມະການປົກຄອງ ຂັ້ນແຂວງ ໂດຍນຳໃຊ້ ແບບພິມ ຮຽດ 03;

3. ຫົວໜ້າ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດນ້ອຍ ບົນພື້ນຖານການເຫັນດີຂອງປະທານຄະນະກຳມະການປົກຄອງ ຂັ້ນເມືອງ ໂດຍນຳໃຊ້ ແບບພິມ ຮຽດ 04.

ພາຍຫຼັງອອກຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລ້ວ ຜູ້ດຳເນີນກິດຈະການດັ່ງກ່າວ ຕ້ອງດຳເນີນການຜະລິດທົດລອງ ພາຍໃນກຳນົດ ສາມສິບ ວັນ, ໃນໄລຍະການຜະລິດທົດລອງ

ບໍ່ອະນຸຍາດໃຫ້ ຈຳໜ່າຍ ຫຼື ຂາຍ ຜະລິດຕະພັນຢ່າງເດັດຂາດ. ຈາກນັ້ນ, ໃຫ້ດຳເນີນການສະເໜີອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໃນມາດຕາ 48 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 6
## ການຂໍອະນຸຍາດ ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

### ມາດຕາ 48 ການຂໍອະນຸຍາດ ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

ຜູ້ທີ່ໄດ້ຮັບຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງແລ້ວ ຕ້ອງໄດ້ຮັບການອະນຸຍາດ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ຢ່າງຖືກຕ້ອງຕາມມາດຕະຖານເຕັກນິກ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

### ມາດຕາ 49 ການປະກອບເອກະສານຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

ເອກະສານປະກອບຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມແບບພິມ ຮຽດ 05;
2. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
3. ລາຍການເຄື່ອງຈັກໃນໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
4. ແຜນການເຄື່ອນໄຫວ ປະຈຳປີ;
5. ຮູບຖ່າຍຂອງຜູ້ດຳເນີນກິດຈະການໂຮງງານ ຂະໜາດ 3x4 ຊັງຕີແມັດ ຈຳນວນ ສີ່ໃບ (ຮູບຖ່າຍຕ້ອງບໍ່ເກີນ ສາມ ເດືອນ);
6. ສຳເນົາ ໃບທະບຽນວິສາຫະກິດ;
7. ສຳເນົາ ໃບຢັ້ງຢືນການມອບອາກອນຕ່າງໆ;
8. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;
9. ສຳເນົາ ໃບອະນຸຍາດປຸກສ້າງ;
10. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
11. ສຳເນົາ ໃບຕາດິນ ຫຼື ສັນຍາເຊົ່າ ຫຼື ສຳປະທານທີ່ດິນ (ຖ້າມີ).

### ມາດຕາ 50 ຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

ຂັ້ນຕອນການຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ປະຕິບັດ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ກວດກາ ເອກະສານປະກອບຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
2. ການກວດກາ ແລະ ປະເມີນຜົນ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
3. ການພິຈາລະນາອອກໃບຢັ້ງຢືນດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ.

### ມາດຕາ 51 ການຮັບຄຳຮ້ອງ ແລະ ກວດກາ ເອກະສານປະກອບຂໍອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

ພາຍຫຼັງໄດ້ຮັບເອກະສານ ປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງແລ້ວ, ຜູ້ໄດ້ຮັບຊຸດເອກະສານດັ່ງກ່າວ ຕ້ອງກວດກາຈຳນວນ ແລະ ເນື້ອໃນເອກະສານປະກອບ ຂໍອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 52 ການກວດກາ ແລະ ປະເມີນຜົນ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະກຳມະການ ເພື່ອກວດກາ ແລະ ປະເມີນຜົນ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມມາດຕະຖານ-ເຕັກນິກໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ບົດວິພາກເສດຖະກິດ-ເຕັກນິກ, ການລົງກວດກາແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກໄວ້ທຸກຄັ້ງ. ບົດບັນທຶກດັ່ງກ່າວ ຕ້ອງໄດ້ລົງລາຍເຊັນຮ່ວມກັບເຈົ້າຂອງໂຮງງານ ເພື່ອເປັນຫຼັກຖານ.

ໃນກໍລະນີ ການກວດກາຫາກເຫັນວ່າ ຂະບວນການຜະລິດບໍ່ສາມາດດຳເນີນການຜະລິດຕາມມາດຕະຖານ-ເຕັກນິກ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ບໍ່ສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ. ຄະນະກຳມະການ ຕ້ອງໃຫ້ການແນະນຳ ເພື່ອປັບປຸງ ແລະ ແກ້ໄຂ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນບົດບັນທຶກການກວດກາ, ພາຍຫຼັງເຈົ້າຂອງໂຮງງານ ໄດ້ປັບປຸງ ແລະ ແກ້ໄຂ ຕາມບົດບັນທຶກແລ້ວ ໃຫ້ສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອກວດກາຄືນ ຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 53 ການພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ພາຍຫຼັງສຳເລັດການກວດກາໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລ້ວ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນສຳເລັດການກວດກາເປັນຕົ້ນໄປ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ຫົວໜ້າ ກົມປ່າໄມ້ ເປັນຜູ້ອອກອອກອະນຸຍາດດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດໃຫຍ່ ໂດຍນຳໃຊ້ ແບບພິມ ຮຽດ 06;
2. ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກອອກອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ ຕາມການສະເໜີຂອງຂະແໜງປ່າໄມ້ ໂດຍນຳໃຊ້ ແບບພິມ ຮຽດ 07;
3. ຫົວໜ້າ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນຜູ້ອອກ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດນ້ອຍ ໂດຍນຳໃຊ້ ແບບພິມ ຮຽດ 08.

**ມາດຕາ 54 ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແມ່ນ ໃບຢັ້ງຢືນດ້ານມາດຕະຖານຂອງໂຮງງານ ເພື່ອອະນຸຍາດໃຫ້ດຳເນີນການຜະລິດ ພາຍຫຼັງທີ່ໄດ້ສຳເລັດການກໍ່ສ້າງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງແລ້ວ. ໃບຢັ້ງຢືນດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ມີອາຍຸ ສອງ ປີ ແລະສາມາດຕໍ່ໄດ້ ໂດຍໃຫ້ຕິດໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ພາຍໃນໂຮງງານ ຫຼື ບໍລິສັດ ຂອງຕົນ.

**ມາດຕາ 55 ການຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ກ່ອນຈະໝົດກຳນົດເວລາ ສາມສິບ ວັນຜູ້ດຳເນີນກິດຈະການ ຕ້ອງສະເໜີຕໍ່ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຕໍ່ອາຍຸຂອງໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງ ເຄື່ອງປ່າຂອງດົງ. ຖ້າໝົດກຳນົດ ສອງ ປີແລ້ວ ຫາກຜູ້ດຳເນີນກິດຈະການໂຮງງານ ບໍ່ມາສະເໜີຕໍ່ອາຍຸຂອງໃບຢັ້ງຢືນ ກໍຈະຖືກໂຈະ ຫຼື ຖອນ ການດຳເນີນກິດຈະການດັ່ງກ່າວ.

ການປະກອບເອກະສານຂໍຕໍ່ອາຍຸ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ມີ ດັ່ງນີ້:

1. ຄຳຮ້ອງຂໍຕໍ່ອາຍຸ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມແບບພິມ ຮຽດ 01;
2. ບົດລາຍງານ ການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມແບບພິມ ຮຽດ 09;
3. ປະກອບເອກະສານຕາມ ມາດຕາ 49 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງໄດ້ຮັບຊຸດເອກະສານຂໍຕໍ່ອາຍຸແລ້ວ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງລົງກວດກາເບິ່ງພື້ນທີ່ຂອງໂຮງງານຕົວຈິງ, ພ້ອມທັງເຮັດບົດບັນທຶກການລົງກວດກາ ພາຍຫຼັງໄດ້ປະຕິບັດຄົບຖ້ວນຕາມຂັ້ນຕອນແລ້ວ ຕ້ອງຕໍ່ໃບຢັ້ງຢືນດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມແບບພິມ ຮຽດ 10, ຮຽດ 11 ແລະ ຮຽດ 12 ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 56 ການໂຈະການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
2. ບໍ່ປະຕິບັດຕາມເງື່ອນໄຂຂອງການສ້າງຕັ້ງ ແລະ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
3. ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
4. ປົດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ;
5. ບໍ່ປະຕິບັດການແກ້ໄຂບັນຫາ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ພາຍຫຼັງມີການແຈ້ງເຕືອນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

ການໂຈະການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງມີກຳນົດເວລາທີ່ແນ່ນອນ ເພື່ອໃຫ້ເຈົ້າຂອງໂຮງງານ ປັບປຸງ ແລະ ແກ້ໄຂ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ໂຈະການດຳເນີນກິດຈະການປຸງແຕ່ງເຄື່ອງປ່າຂອງດົງແລ້ວ ຕ້ອງແຈ້ງໃຫ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງເພື່ອຮັບຊາບ.

**ມາດຕາ 57 ການຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຈະຖືກຖອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ ທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງຂໍ້ຕົກລົງສະບັບນີ້;
2. ບໍ່ດຳເນີນກິດຈະການ ພາຍໃນກຳນົດ ສອງ ປີ ໂດຍມີການແຈ້ງໂຈະເປັນລາຍລັກອັກສອນ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
3. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
4. ຕາມການສະເໜີຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
5. ຕາມການຕັດສິນຂອງສານ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ຖອນໃບຢັ້ງຢືນດຳເນີນກິດຈະການປຸງແຕ່ງເຄື່ອງປ່າຂອງດົງ, ຈາກນັ້ນຈຶ່ງນຳສະເໜີຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາຍົກເລີກຂໍ້ຕົກລົງດັ່ງກ່າວ ແລ້ວແຈ້ງໃຫ້ ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາຍົກເລີກໃບທະບຽນວິສາຫະກິດ ຕາມກົດໝາຍ.

**ມາດຕາ 58 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຄືນໃໝ່**

ໃນກໍລະນີ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການ ຕ້ອງຍື່ນໃບຄຳຮ້ອງ ຫາຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາອອກໃບຢັ້ງຢືນຄືນໃໝ່.

**ມາດຕາ 59 ຄ່າທຳນຽມອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ຄ່າທຳນຽມ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ໃບຢັ້ງຢືນດຳເນີນກິດຈະການ ຄືນໃໝ່ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ໃນແຕ່ລະໄລຍະ.

## ໝວດທີ 7
## ການປ່ຽນແປງກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ

**ມາດຕາ 60 ການປ່ຽນແປງກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການປ່ຽນແປງກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ປະກອບມີ ດັ່ງນີ້:

1. ການຂະຫຍາຍໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

2. ການຍົກຍ້າຍໂຮງງານເຄື່ອງປ່າຂອງດົງ;
3. ການຍົກຍ້າຍເຄື່ອງຈັກ;
4. ການໂອນ, ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານ;
5. ການສືບທອດການດຳເນີນກິດຈະການໂຮງງານ;
6. ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ.

**ມາດຕາ 61 ການຂະຫຍາຍໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການຂະຫຍາຍໂຮງງານ ທຸກຂະໜາດ ມີ ສາມ ຮູບການ ຄື: ການເພີ່ມເຄື່ອງຈັກ, ການເພີ່ມເນື້ອທີ່ອາຄານຜະລິດຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ການເພີ່ມທັງສອງຢ່າງພ້ອມກັນ.

1. ການຂະຫຍາຍໂຮງງານ ໂດຍການເພີ່ມເຄື່ອງຈັກ ມີ ສອງ ກໍລະນີ ດັ່ງນີ້:

– ກໍລະນີທີ ໜຶ່ງ: ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

– ກໍລະນີທີ ສອງ: ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ທີ່ມີກຳລັງແຮງຂອງເຄື່ອງຈັກລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ໜຶ່ງຮ້ອຍ ແຮງມ້າ, ຖ້າໂຮງງານ ເພີ່ມກຳລັງແຮງຂອງເຄື່ອງຈັກ ຕັ້ງແຕ່ ຫ້າສິບ ແຮງມ້າ ຂຶ້ນໄປ ຖືວ່າເປັນການຂະຫຍາຍ.

2. ການຂະຫຍາຍໂຮງງານ ໂດຍການເພີ່ມເນື້ອທີ່ອາຄານ ມີ ສອງ ກໍລະນີ ດັ່ງນີ້:

– ກໍລະນີທີ ໜຶ່ງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນບໍ່ເກີນ ສອງຮ້ອຍຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ຫ້າສິບ ສ່ວນຮ້ອຍ ຂຶ້ນໄປ ຖືວ່າເປັນການຂະຫຍາຍ;

– ກໍລະນີທີ ສອງ: ອາຄານຜະລິດຂອງໂຮງງານ ທີ່ມີເນື້ອທີ່ລວມ ທີ່ອະນຸມັດໃນເບື້ອງຕົ້ນເກີນກວ່າ ສອງຮ້ອຍ ຕາແມັດ, ຖ້າເພີ່ມເນື້ອທີ່ ຕັ້ງແຕ່ ໜຶ່ງຮ້ອຍ ຕາແມັດຂຶ້ນໄປ ຖືວ່າເປັນການຂະຫຍາຍ.

ການຂະຫຍາຍໂຮງງານ ດ້ວຍການເພີ່ມອາຄານ ທີ່ບໍ່ແມ່ນອາຄານຜະລິດ, ສາງວັດຖຸດິບ, ສາງຜະລິດຕະພັນ ຫຼື ຫ້ອງການບໍລິຫານອື່ນ ບໍ່ຖືວ່າເປັນການຂະຫຍາຍ ແຕ່ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການກ່ຽວກັບການປຸກສ້າງ.

ຜູ້ດຳເນີນກິດຈະການໂຮງງານ ສາມາດຂະຫຍາຍໂຮງງານຢູ່ໃນສະຖານທີ່ດຽວກັນໄດ້ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ຄືກັນກັບການຂໍດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃນສ່ວນທີ່ຂະຫຍາຍ.

**ມາດຕາ 62 ການຍົກຍ້າຍໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ຜູ້ດຳເນີນກິດຈະການໂຮງງານ ສາມາດຍົກຍ້າຍໂຮງງານໄປຕັ້ງຢູ່ສະຖານທີ່ອື່ນໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ກ່ຽວກັບການສ້າງຕັ້ງ ແລະ ດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຢູ່ສະຖານທີ່ໃໝ່ ຕາມມາດຕາ 42 ແລະ 49 ຂອງຂໍ້ຕົກລົງສະບັບນີ້. ກ່ອນຍົກຍ້າຍໂຮງງານຕ້ອງສະເໜີຂໍໂຈະ ຫຼື ຖອນໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ແລະ 57 ຂອງຂໍ້ຕົກລົງສະບັບນີ້ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ສຳລັບ ເຄື່ອງຈັກ ແລະ ສິ່ງປຸກສ້າງ ທີ່ຈະຍົກຍ້າຍ ຕ້ອງຂໍອະນຸຍາດຈາກ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 63 ການຍົກຍ້າຍເຄື່ອງຈັກ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ສາມາດຍົກຍ້າຍເຄື່ອງຈັກໄປສະຖານທີ່ໂຮງງານອື່ນໄດ້ ຊຶ່ງມີ ສອງ ຮູບການ ຄື ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນ ແລະ ການຍົກຍ້າຍເຄື່ອງຈັກຖາວອນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍົກຍ້າຍເຄື່ອງຈັກຊົ່ວຄາວ ຫຼື ບາງສ່ວນ ຢູ່ພາຍໃນໂຮງງານ ໄປສະຖານທີ່ອື່ນເປັນການຊົ່ວຄາວໃຫ້ຍື່ນໃບສະເໜີຂໍຍົກຍ້າຍເຄື່ອງຈັກ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ, ຄັດຕິດລາຍການເຄື່ອງຈັກ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບການຍົກຍ້າຍດັ່ງກ່າວ, ການຍົກ

ຍ້າຍເຄື່ອງຈັກຊົ່ວຄາວ ຕ້ອງເອົາກັບຄືນ ພາຍໃນ ໜຶ່ງ ປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ, ກໍລະນີຫາກມີຄວາມຈຳເປັນຕ້ອງການນຳໃຊ້ເກີນ ໜຶ່ງ ປີ ສາມາດສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໂດຍຊີ້ແຈງເຫດຜົນໃຫ້ລະອຽດ ເພື່ອຂໍຕໍ່ກຳນົດເວລາ ແຕ່ສູງສຸດຕໍ່ໄດ້ບໍ່ໃຫ້ເກີນ ໜຶ່ງ ປີ, ພ້ອມນີ້ຕ້ອງລະບຸເງື່ອນໄຂ ຫຼື ວິທີການ ເພື່ອຮັບປະກັນຄວາມປອດໄພໃນການຂົນສົ່ງເຄື່ອງຈັກ;

2. ການຍົກຍ້າຍເຄື່ອງຈັກຖາວອນ ໃນກໍລະນີໃດໜຶ່ງ ເປັນຕົ້ນ ເຄື່ອງຈັກເປ່ເພ ແລະ ນຳໃຊ້ບໍ່ໄດ້, ຂາຍ ຫຼື ໂອນໃຫ້ບຸກຄົນອື່ນ ຊຶ່ງມີຄວາມຈຳເປັນຕ້ອງຮື້ຖອນອອກຈາກໂຮງງານໄປບ່ອນອື່ນ ຕ້ອງລາຍງານຕໍ່ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພ້ອມທັງລະບຸເຫດຜົນຂອງການຍົກຍ້າຍ ແລະ ຄັດຕິດລາຍການເຄື່ອງຈັກ ເພື່ອລົງກວດກາກ່ອນຮື້ຖອນ, ໃນນັ້ນຕ້ອງດັດແກ້ລາຍການເຄື່ອງຈັກເດີມ ແລະ ແຜນຜັງການຕິດຕັ້ງເຄື່ອງຈັກຄືນໃໝ່ ພາຍໃນ ສິບຫ້າ ວັນ.

**ມາດຕາ 64 ການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ຜູ້ອື່ນ ພາຍຫຼັງສິ້ນສຸດຂັ້ນຕອນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງແລ້ວ ຜູ້ດຳເນີນກິດຈະການຜູ້ເກົ່າ ຕ້ອງລາຍງານໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ເຊັນສັນຍາການໂອນ, ໃຫ້ເຊົ່າ ຫຼື ຂາຍກິດຈະການ ເປັນຕົ້ນໄປ.

ຜູ້ໄດ້ຮັບການໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການນັ້ນ ຕ້ອງຍື່ນຄຳຮ້ອງ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຫຼື ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານ ໂດຍປ່ຽນຊື່ຜູ້ດຳເນີນກິດຈະການ ຈາກເຈົ້າຂອງເດີມ ມາເປັນຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫຼື ຜູ້ຊື້ ກິດຈະການ ພາຍໃນ ສາມສິບ ວັນ ນັບແຕ່ວັນເຊັນສັນຍາການໂອນ, ເຊົ່າ ຫຼື ຊື້ ກິດຈະການດັ່ງກ່າວ.

**ມາດຕາ 65 ການສືບທອດການດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ໃນກໍລະນີ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫຼື ຜູ້ໄດ້ຮັບສິດຄອບຄອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຊາບ ພາຍໃນ ຫົກສິບ ວັນ ນັບແຕ່ວັນຜູ້ດຳເນີນກິດຈະການ ໄດ້ເສຍຊີວິດ ແລະ ສະເໜີຂໍປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ສິ່ງແວດລ້ອມ ແລະ ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໂດຍປ່ຽນຊື່ ຈາກ ຜູ້ດຳເນີນກິດຈະການຜູ້ເກົ່າ ເປັນຊື່ຜູ້ທີ່ໄດ້ຮັບສິດສືບທອດ.

ພາຍຫຼັງ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໄດ້ເສຍຊີວິດເກີນ ເກົ້າສິບ ວັນ ຫາກບໍ່ມີຜູ້ສະເໜີຂໍສືບທອດ ຖືວ່າໃບຢັ້ງຢືນການດຳເນີນກິດຈະການນັ້ນ ໄດ້ໝົດອາຍຸລົງ. ຖ້າຫາກມີຜູ້ສືບທອດ ໃຫ້ປະຕິບັດຕາມຂັ້ນຕອນຄືກັນກັບການຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃໝ່.

**ມາດຕາ 66 ການປ່ຽນຊື່ໂຮງງານ ຫຼື ປ່ຽນ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ**

ການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ສາມາດປ່ຽນຊື່ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຫຼື ປ່ຽນຜູ້ດຳເນີນກິດຈະການໄດ້ ແຕ່ຕ້ອງສະເໜີ ຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຫຼື ຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍປ່ຽນແປງເນື້ອໃນ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ແລະ ໃບຢັ້ງຢືນດຳເນີນກິດຈະການ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມການແບ່ງຂັ້ນຄຸ້ມຄອງ.

## ໝວດທີ 8
## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການ ປຸງແຕ່ງເຄື່ອງປ່າຂອງດົງ

**ມາດຕາ 67 ສິດ ຂອງຜູ້ດຳເນີນກິດຈະການ ປຸງແຕ່ງເຄື່ອງປ່າຂອງດົງ**

ຜູ້ດຳເນີນກິດຈະການ ປຸງແຕ່ງເຄື່ອງປ່າຂອງດົງ ມີ ສິດ ດັ່ງນີ້:

1. ສະເໜີຂໍອະນຸມັດແຜນຂຸດຄົ້ນເຄື່ອງປ່າຂອງດົງ ໃນເຂດທີ່ລັດອະນຸຍາດ;

2. ເປັນເຈົ້າກຳມະສິດໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ມີຜົນປະໂຫຍດ ທີ່ໄດ້ຮັບຈາກການດຳເນີນກິດຈະການ;

3. ປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນກິດຈະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ເຄື່ອນໄຫວດຳເນີນກິດຈະການ ຕາມຂອບເຂດສິດທີ່ໄດ້ຮັບອະນຸຍາດ ໃນໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

5. ສະເໜີ ຂໍນະໂຍບາຍ, ການສົ່ງເສີມ, ການຊ່ວຍເຫຼືອ, ການແນະນຳ ຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;

6. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້ ຂາຍ, ຂະຫຍາຍການດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ, ຢຸດເຊົາກິດຈະການ ຕາມກົດໝາຍ ແລະ ລະບຽບການ;

7. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;

8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 68 ພັນທະ ຂອງຜູ້ດຳເນີນກິດຈະການ ປຸງແຕ່ງເຄື່ອງປ່າຂອງດົງ**

ຜູ້ດຳເນີນກິດຈະການປຸງແຕ່ງເຄື່ອງປ່າຂອງດົງ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ໃບຢັ້ງຢືນດຳເນີນກິດຈະການ;

2. ເສຍ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

3. ຜູ້ປະກອບການ ທີ່ດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງມີພື້ນທີ່ປູກ ແລະ ຟື້ນຟູ ເພື່ອຮັບປະກັນການຕອບສະໜອງວັດຖຸດິບ ໃຫ້ມີຄວາມຍືນຍົງ;

4. ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ສະຫວັດດີການສັງຄົມ, ອຸປະກອນປ້ອງກັນຄວາມປອດໄພ;

5. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ສານເຄມີ ແລະ ໄພພິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ລາຍງານການເກີດອຸປະຕິເຫດຂັ້ນຮ້າຍແຮງ ຢູ່ພາຍໃນໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

7. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນໂຮງງານປຸງແຕ່ງເຄື່ອງປ່າຂອງດົງຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ສິ່ງແວດລ້ອມ;

8. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ;

9. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;

10. ກ່ອນຢຸດເຊົາດຳເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕ້ອງໄດ້ບຳບັດນ້ຳເປື້ອນ, ບຳບັດ ຫຼື ກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

11. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລັດ;

12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ ວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ

**ມາດຕາ 69 ອົງການຄຸ້ມຄອງ ແລະ ກວດກາ ວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ**

ກົມປ່າໄມ້ ຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະ ກວດກາ ວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ແລະ ເປັນເຈົ້າການໃນການປະສານສົມທົບກັບ ບັນດາກົມຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ປະກອບດ້ວຍ:

1. ກົມປ່າໄມ້, ກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
2. ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ກົມປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ໂດຍສ້າງເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ;
2. ຝຶກອົບຮົມທາງດ້ານວິຊາການ ກ່ຽວກັບວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ;
3. ຄົ້ນຄວ້າ ແລະ ນໍາສະເໜີ ລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເພື່ອອອກຂໍ້ຕົກລົງວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດໃຫຍ່;
4. ຄົ້ນຄ້ວາ, ສັງລວມ ແຜນການຂຸດຄົ້ນ, ເກັບກູ້ ເຄື່ອງປ່າຂອງດົງ ບັນຊີ I ປະຈໍາປີ ຕາມການສະເໜີ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອສະເໜີ ຫາ ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ນໍາສະເໜີຕໍ່ລັດຖະບານ ພິຈາລະນາ;
5. ອອກ, ຕໍ່, ດັດແກ້, ໂຈະ ຫຼື ຖອນ ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດໃຫຍ່;
6. ພິຈາລະນາ ຮັບຮອງແຜນການນໍາເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ໃຫ້ຖືກຕ້ອງຕາມເປົ້າໝາຍຂອງການດໍາເນີນກິດຈະການ ໂດຍສອດຄ່ອງກັບບົດວິພາກເສດຖະກິດ-ເຕັກນິກ ໂຮງງານຂະໜາດໃຫຍ່;
7. ສົມທົບກັບ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຊຸກຍູ້, ຕິດຕາມ, ກວດກາ ມາດຕະຖານເຕັກນິກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ ລວມທັງ ວັດຖຸດິບ ສິນເຂົ້າ ແລະ ຜະລິດຕະພັນ ສິນອອກ ຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃນຂອບເຂດທົ່ວປະເທດ;
8. ສະຫຼຸບ ສັງລວມ, ລາຍງານ ຜົນການຈັດຕັ້ງປະຕິບັດ ຂຸດຄົ້ນ ແລະ ເກັບກູ້ເຄື່ອງປ່າຂອງດົງ ປະຈໍາປີ ໃຫ້ກະຊວງກະສິກໍາ ແລະ ສິ່ງແວດລ້ອມ;
9. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ໂດຍສ້າງເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຝຶກອົບຮົມທາງດ້ານວິຊາການ ກ່ຽວກັບວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ;
3. ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການສ້າງແຜນຂຸດຄົ້ນ, ເກັບກູ້ ເຄື່ອງປ່າຂອງດົງ ປະຈໍາປີ ເພື່ອສະເໜີຫາກົມປ່າໄມ້;

4. ຄົ້ນຄ້ວາ, ສັງລວມ ແຜນການຂຸດຄົ້ນ, ເກັບກູ້ ເຄື່ອງປ່າຂອງດົງ ບັນຊີ I ນໍາສະເໜີ ຫາ ກົມປ່າໄມ້ ສັງລວມ ລາຍງານ ລັດຖະບານ ອະນຸຍາດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ປະຈໍາປີ;

5. ຄົ້ນຄ້ວາ, ສັງລວມ ແຜນການຂຸດຄົ້ນ, ເກັບກູ້ ເຄື່ອງປ່າຂອງດົງ ບັນຊີ II ນໍາສະເໜີ ຫາ ປະທານ ຄະນະກໍາມະການປົກຄອງ ຂັ້ນແຂວງ ພິຈາລະນາ ອະນຸຍາດແຜນການຂຸດຄົ້ນເຄື່ອງປ່າຂອງດົງ ປະຈໍາປີ;

6. ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງການ ຊື້ ຂາຍ, ການເຄື່ອນຍ້າຍ ແລະ ການສົ່ງອອກເຄື່ອງປ່າຂອງດົງ;

7. ອອກໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ ແລະ ສົ່ງອອກ ຕ່າງປະເທດ;

8. ຄົ້ນຄວ້າອອກ ຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດ ກາງ ໂດຍການເຫັນດີ ຂອງ ປະທານຄະນະກໍາມະການປົກຄອງຂັ້ນແຂວງ;

9. ຄົ້ນຄວ້າ, ພິຈາລະນາ ອອກຂໍ້ຕົກລົງ ການສ້າງຕັ້ງສາງເກັບເຄື່ອງປ່າຂອງດົງ;

10.ພິຈາລະນາ ຮັບຮອງແຜນການນໍາເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງ ວັດຖຸປະກອນ ກໍ່ສ້າງໂຮງງານ ທີ່ນໍາເຂົ້າມາໃຊ້ໃນໂຮງງານ ໃຫ້ຖືກຕ້ອງຕາມເປົ້າໝາຍຂອງການດໍາເນີນກິດຈະການ ໂດຍສອດ ຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຂະໜາດກາງ;

11.ອອກ, ຕໍ່, ດັດແກ້, ໂຈະ ຫຼື ຖອນ ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ ແລະ ສາງເກັບຊື້ເຄື່ອງປ່າຂອງດົງ;

12.ຊຸກຍູ້, ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ ລວມທັງ ວັດຖຸດິບ ສິນເຂົ້າ ແລະ ຜະລິດຕະພັນ ສິນອອກ ຂອງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ;

13.ຢັ້ງຢືນແຜນການເຄື່ອນໄຫວ ປະຈໍາງວດ ແລະ ປະຈໍາປີ ຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດກາງ;

14.ສະຫຼຸບ ສັງລວມ, ລາຍງານຜົນການຈັດຕັ້ງປະຕິບັດ ການຂຸດຄົ້ນ ແລະ ເກັບກູ້ເຄື່ອງປ່າຂອງດົງ ປະຈໍາປີ ແລະ ສະພາບການເຄື່ອນໄຫວຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ ຄະນະກໍາມະການປົກຄອງ ຂັ້ນແຂວງ ແລະ ກົມປ່າໄມ້ ເປັນແຕ່ລະໄລຍະ;

15.ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ໂດຍສ້າງເປັນແຜນການ, ແຜນງານ ແລະ ໂຄງ ການລະອຽດ ພ້ອມທັງຈັດຕັ້ງປະຕິບັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄຸ້ມຄອງວັດຖຸດິບ ເຂົ້າໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ພິຈາລະນາ ຮັບຮອງແຜນການນໍາເຂົ້າ ເຄື່ອງຈັກ, ອຸປະກອນ ແລະ ອາໄຫຼ່ ລວມທັງວັດຖຸປະກອນ ກໍ່ສ້າງໂຮງງານ ທີ່ນໍາເຂົ້າມາໃຊ້ໃນໂຮງງານ ໃຫ້ຖືກຕ້ອງຕາມເປົ້າໝາຍຂອງການດໍາເນີນກິດຈະການ ໂດຍສອດ ຄ່ອງກັບ ບົດວິພາກເສດຖະກິດ-ເຕັກນິກ ໂຮງງານຂະໜາດນ້ອຍ;

4. ອອກ, ຕໍ່, ດັດແກ້, ໂຈະ ຫຼື ຖອນ ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຂະໜາດນ້ອຍ;

5. ຊຸກຍູ້, ຕິດຕາມ ແລະ ກວດກາ ມາດຕະຖານເຕັກນິກ, ຂະບວນການຜະລິດ, ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມ ໂຮງງານ ລວມທັງວັດຖຸດິບ ສິນເຂົ້າ ແລະ ຜະລິດຕະພັນ ສິນອອກ ຂອງໂຮງງານປຸງ ແຕ່ງເຄື່ອງປ່າຂອງດົງ ຂະໜາດນ້ອຍ;

6. ສະຫຼຸບ ສັງລວມ, ລາຍງານ ການຂຸດຄົ້ນ ແລະ ເກັບກູ້ເຄື່ອງປ່າຂອງດົງ ທີ່ເກີດຕາມລະດູການ ແລະ ສະພາບການເຄື່ອນໄຫວຂອງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ຄະນະກໍາມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນແຕ່ລະໄລຍະ;

7. ນໍາໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 73 ເນື້ອໃນການກວດກາວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ**

ການກວດກາວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
3. ການຄຸ້ມຄອງ ແລະ ປຸງແຕ່ງເຄື່ອງປ່າຂອງດົງ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 74 ຮູບການກວດກາວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ**

ການກວດກາວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

ໃນການດໍາເນີນການກວດກາ ວຽກງານການຄຸ້ມຄອງ ແລະ ປຸງແຕ່ງ ເຄື່ອງປ່າຂອງດົງ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 75 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ພະແນກກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 76 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 20 ກຸມພາ 2026 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ປອ. ລິນຄໍາ ດວງສະຫວັນ**

## ເອກະສານຊ້ອນທ້າຍ

1. ແບບພິມ ຄຍນ : ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ;
2. ແບບພິມ ຄດອ : ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ອອກຕ່າງປະເທດ;
3. ແບບພິມ ຮງດ 01 ໃບຄໍາຮ້ອງຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ/ສາງເກັບເຄື່ອງປ່າຂອງດົງ;
4. ແບບພິມ ຮງດ 02 ຂໍ້ຕົກລົງ ວ່າດ້ວຍການອະນຸມັດ ສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ (ກສ);
5. ແບບພິມ ຮງດ 03 ຂໍ້ຕົກລົງ ວ່າດ້ວຍການອະນຸມັດສ້າງຕັ້ງໂຮງງານ/ສາງເກັບເຄື່ອງປ່າຂອງດົງ (ກສຂ);
6. ແບບພິມ ຮງດ 04 ຂໍ້ຕົກລົງ ວ່າດ້ວຍການອະນຸມັດ ສ້າງຕັ້ງໂຮງງານປຸງແຕ່ງເຄື່ອງປ່າຂອງດົງ (ກສມ);
7. ແບບພິມ ຮງດ 05 ໃບຄໍາຮ້ອງຂໍອະນຸຍາດດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
8. ແບບພິມ ຮງດ 06 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ (ກປມ);
9. ແບບພິມ ຮງດ 07 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ (ກສຂ);
10. ແບບພິມ ຮງດ 08 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ (ກສມ);
11. ແບບພິມ ຮງດ 09 ໜັງສືລາຍງານ ສະພາບການຈັດຕັ້ງປະຕິບັດການດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ;
12. ແບບພິມ ຮງດ 10 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕໍ່ອາຍຸ...(ກປມ);
13. ແບບພິມ ຮງດ 11 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕໍ່ອາຍຸ...(ກສຂ);
14. ແບບພິມ ຮງດ 12 ໃບຢັ້ງຢືນດໍາເນີນກິດຈະການໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ຕໍ່ອາຍຸ...(ກສມ).

ຄຍມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ.....................

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ຂະແໜງປ່າໄມ້

ເລກລະຫັດ……………………

ເລກທີ………....................../ປມຂ

ວັນທີ…………………………

## ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ພາຍໃນ

- ອີງຕາມ ໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ ສະບັບເລກທີ…..............., ລົງວັນທີ................;
- ອີງຕາມ ບັນຊີເຄື່ອງປ່າຂອງດົງ ສະບັບເລກທີ.................., ລົງວັນທີ…………………………;
- ອີງຕາມ ໃບສະເໜີຂອງ………………..………ສະບັບເລກທີ………, ລົງວັນທີ………..;
- ອີງຕາມ ບົດບັນທຶກ ການກວດກາຕົວຈິງຂອງວິຊາການ ສະບັບລົງວັນທີ……..........

ຂະແໜງປ່າໄມ້ແຂວງ................ອອກໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງສະບັບນີ້ ໃຫ້ແກ່............. ................................ ເພື່ອການເຄື່ອນຍ້າຍຈາກບ້ານ/ໂຮງງານ......................... ເມືອງ............................. ແຂວງ...................................... ເຖິງ ບ້ານ/ໂຮງງານ..................................... ເມືອງ..................................., ແຂວງ.......................................ຈຳນວນ............................... ຫົວໜ່ວຍ.......................................

| ລຳດັບ | ປະເພດເຄື່ອງປ່າຂອງດົງ | ຈຳນວນ | ຫົວໜ່ວຍ | ໝາຍເຫດ |
|---|---|---|---|---|
| | | | | |
| | ລວມ/Total: | | | |

1. ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ສະບັບນີ້, ນຳໃຊ້ໄດ້ແຕ່ວັນທີ…….......... ເຖິງວັນທີ………….;
2. ເວລາເຄື່ອນຍ້າຍຕ້ອງຖືເອົາໃບອະນຸຍາດເຄື່ອນຍ້າຍສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ ໃນເວລາກວດກາ;
3. ໃນກໍລະນີກວດພົບເຫັນວ່າ ມີການເອົາສິນຄ້າອື່ນປະປົນ ຫຼື ບໍ່ສອດຄ່ອງຕາມໃບອະນຸຍາດສະບັບນີ້, ເຈົ້າຂອງບໍລິສັດ/ໂຮງງານ ແລະ ເຈົ້າຂອງລົດ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ກົດໝາຍ;
4. ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ຕ້ອງມີຕາປະທັບຂອງ ກົມປ່າໄມ້ ທີ່ເປັນກາແດງເທົ່ານັ້ນ ຈຶ່ງຖືວ່າຖືກຕ້ອງຕາມກົດໝາຍ ແລະ ຊຸດໜຶ່ງ ມີ 3 ສະບັບ (3 ສີ) ໃຊ້ໄດ້ແຕ່ສະບັບຕົ້ນເທົ່ານັ້ນ, ສ່ວນໃບສຳເນົາ, ໃບມີຮ້ອຍລຶບ, ຂີດ, ຂ້າຕົວເລກ ຫຼື ຕົວໜັງສື ແມ່ນຖືວ່າບໍ່ສາມາດໃຊ້ໄດ້ ໃນການເຄື່ອນຍ້າຍ;
5. ຫ້າມປອມແປງ ແລະ ຊື້-ຂາຍ ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ສະບັບນີ້ຢ່າງເດັດຂາດ ຖ້າຜູ້ໃດລະເມີດຈະໄດ້ຮັບໂທດຕາມກົດໝາຍ.

**ຮັບຮູ້ ແລະ ຢັ້ງຢືນ**

**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ** **ຫົວໜ້າຂະແໜງປ່າໄມ້**

ບ່ອນນຳສົ່ງ:
1. ກົມປ່າໄມ້ 01 ສະບັບ;
2. ຜູ້ໄດ້ຮັບອະນຸຍາດ 01 ສະບັບ;
3. ເກັບມ້ຽນ 01 ສະບັບ.

ລຄອ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**Lao People's Democratic Republic**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
**Peace Independence Democracy Unity Prosperity**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ /Ministry of Agriculture and Environment
ພະແນກກະສິກຳ ແລະ ສິ່ງແວດລ້ອມ /Provincial Agriculture and Environment Office
ຂະແໜງປ່າໄມ້ /Provincial Forestry Section

ລະຫັດ/Code No..............
ເລກທີ/ No...../ປມຂ/PAFO
ວັນທີ/ date.....................

# ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ອອກຕ່າງປະເທດ
# Permit for Transportation of Non-Timber Forest Products for Export

ອີງຕາມ/ Reference is made to:

- ໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ/ NTPF harvest permit of the Provincial Agriculture and Environment Office of .............., ສະບັບເລກທີ/ No ............./ກສຂ, ລົງວັນທີ/ PAEO, Date ..............................;
- ບັນຊີເຄື່ອງປ່າຂອງດົງ/ List of NTFP ເລກທີ/ No ............../............., ລົງວັນທີ/ Dated ..................;
- ໃບສະເໜີຂອງ/ Request made by............., ສະບັບເລກທີ/ No ........./......., ລົງວັນ/ dated ທີ..........;
- ບົດບັນທຶກການກວດກາຕົວຈິງຂອງວິຊາການ/ Recorde of technical inspection, ລົງວັນທີ/ Dated ..........

ຂະແໜງປ່າໄມ້ແຂວງ/ Provincial Forestry Section of ....... ອອກໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ສະບັບນີ້ໃຫ້ແກ່/ Issues this transport Permit to ..........................................ເພື່ອການເຄື່ອນຍ້າຍອອກໄປປະເທດ/ For export to ........................................ ໂດຍຜ່ານດ່ານ/ transit via ........................... ແຂວງ/Province .......................................ຈຳນວນ/ Quantity.......................................

| ລຳດັບ/Item | ປະເພດເຄື່ອງປ່າຂອງດົງ/Description | ຈຳນວນ/Qty | ຫົວໜ່ວຍ/Unit | ໝາຍເຫດ/Remarks |
|---|---|---|---|---|
| | | | | |
| | ລວມ/Total: | | | |

1. ໃບອະນຸຍາດເຄື່ອນຍ້າຍເຄື່ອງປ່າຂອງດົງ ສະບັບນີ້, ນຳໃຊ້ໄດ້ແຕ່ວັນທີ/ This transport permit is valid from ……..................................…..........., ເຖິງ ວັນທີ/ to ..........................................;
2. ເວລາເຄື່ອນຍ້າຍຕ້ອງຖືເອົາໃບອະນຸຍາດເຄື່ອນຍ້າຍສະບັບນີ້ ໄປພ້ອມທຸກໆຄັ້ງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ ໃນເວລາກວດກາ The transport permit is issued for each load of Non Timber forest Products being transported and upon Technical inspection by government;
3. ແຕ່ລະຊຸດຂອງໃບເຄື່ອນຍ້າຍເຄື່ອງປ່າຂອງດົງ ປະກອບມີ 3 ສະບັບ (3 ສີ) ແລະ ໃນນີ້ມີພຽງແຕ່ສະບັບຕົ້ນ (ສີຂາວ) ມີຕາປະທັບເປັນສີແດງ ຂອງກົມປ່າໄມ້ ເທົ່ານັ້ນໃຫ້ຢັ້ງຢືນການເຄື່ອນຍ້າຍໄດ້ຖືກຕ້ອງຕາມກົດໝາຍ, ສ່ວນໃບສຳເນົາ ຫຼື

ໃບມີຮ້ອຍລືບ, ຂີດ, ຂ້າຕົວເລກ ຫຼື ຕົວໜັງສື ແມ່ນໃຊ້ຢັ້ງຢືນການເຄື່ອນຍ້າຍບໍ່ໄດ້ Each set of the Transportation permit contains three duplicated copies of different colours of which only the original copy (white coloured front copy) bears the original (rad) seal of Department of forestry of valid. The photocopy or copy with corrected (crossed out) figures or letters are valid;

4. ການປອມແປງ, ໂອນ ຫຼື ຊື້-ຂາຍ ໃບເຄື່ອນຍ້າຍເຄື່ອງປ່າຂອງດົງ ສະບັບນີ້, ຖືວ່າເປັນການລະເມີດຕໍ່ກົດໝາຍ Falsifying, handing over or sale or transfer of this transportation permit is illegal.

| ຮັບຮູ້ ແລະ ຢັ້ງຢືນ<br>**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ**<br>**Acknowledged by Head of PAEO** | **ຫົວໜ້າຂະແໜງປ່າໄມ້**<br>**Head of provincial Forestry Setion** |
|---|---|

ບ່ອນນຳສົ່ງ/CC:

1. ກົມປ່າໄມ້/DOF 01ສະບັບ;
2. ຜູ້ໄດ້ຮັບອະນຸຍາດ/Applicant 01ສະບັບ;
3. ເກັບມ້ຽນ/Filling 01ສະບັບ.

ຮູບ 01

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄໍາຮ້ອງ

## ຂໍອະນຸຍາດສ້າງຕັ້ງ ໂຮງງານປຸງແຕ່ງເຄື່ອງປ່າຂອງດົງ/ສາງເກັບເຄື່ອງປ່າຂອງດົງ

☐ ສ້າງຕັ້ງໂຮງງານ/ສາງ, ☐ ຂະຫຍາຍໂຮງງານ/ສາງເກັບເຄື່ອງປ່າຂອງດົງ, ຄັ້ງທີ...............

**ຮຽນ:** ..............................................................................................................

**ເລື່ອງ:** ..............................................................................................................

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກໍາປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ປຸງແຕ່ງເຄື່ອງປ່າຂອງດົງ ສະບັບເລກທີ............/ກສ, ລົງວັນທີ........

ຂ້າພະເຈົ້າ................................................, ອາຍຸ.............. ປີ, ສັນຊາດ.................................., ປະຈຸບັນຢູ່ເຮືອນເລກທີ................., ບ້ານ....................., ເມືອງ......................., ແຂວງ..........................., ໂທລະສັບ........................................, Email.............................................................

ຂ້າພະເຈົ້າຂຽນຄໍາຮ້ອງສະບັບນີ້ໃນນາມເປັນ:

☐ ເຈົ້າຂອງກິດຈະການ ☐ ປະທານຄະນະກໍາມະການ ບໍລິຫານ ບໍລິສັດ

☐ ຄະນະອໍານວຍການ ☐ ຜູ້ຈັດການ ບໍລິຫານ

ຂໍອະນຸຍາດ ສ້າງຕັ້ງໂຮງງານ/ສາງເກັບເຄື່ອງປ່າຂອງດົງ ພາຍໃຕ້ ຂໍ້ຕົກລົງ ວ່າດ້ວຍຄຸ້ມຄອງ ແລະ ປຸງແຕ່ງເຄື່ອງປ່າຂອງດົງ ແລະ ສະເໜີຂໍ້ມູນປະກອບຄໍາຮ້ອງ ດັ່ງນີ້:

- ຊື່ໂຮງງານ:................................................ ທີ່ຕັ້ງໂຮງງານຢູ່ຖະໜົນ:....................................;
  ບ້ານ:............................... ເມືອງ:..............................., ແຂວງ:....................................;
- ໃບອະນຸຍາດລົງທຶນ (ຖ້າມີ) ສະບັບເລກທີ:......................./............., ລົງວັນທີ.........................;
- ໃບທະບຽນວິສາຫະກິດ ສະບັບເລກທີ:......................./..........., ລົງວັນທີ......................................;
- ໃບທະບຽນອາກອນ ສະບັບເລກທີ:............./........, ລົງວັນທີ.....................................

## I. ຊື່ໂຮງງານ/ສາງເກັບເຄື່ອງປ່າຂອງດົງ

ເຄື່ອງປ່າຂອງດົງ:....................................................................................................................

- ດໍາເນີນກິດຈະການ:..........................................................................................................;
- ຂະຫຍາຍໂຮງງານ/ສາງດ້ວຍການເພີ່ມ ☐ ເນື້ອໃນເອກະສານ ☐ ເຄື່ອງຈັກ.

## II. ທີ່ຕັ້ງໂຮງງານ/ສາງເກັບເຄື່ອງປ່າຂອງດົງ (ຕາມແຜນຜັງທີ່ຂັດຕິດມາພ້ອມ)

ຢູ່ຖະໜົນ........................ບ້ານ......................., ເມືອງ:........................, ແຂວງ:...........................;
ໂທລະສັບ:................................., ແຟັກ:...................................;

1. ບໍລິເວນໂຮງງານ/ສາງເກັບເຄື່ອງປ່າຂອງດົງ: ມີເນື້ອທີ່ທັງໝົດ.................................................;

- ອາຄານໂຮງງານ ມີເນື້ອທີ່:................................, ເພີ່ມຂຶ້ນໃໝ່:............................................;
- ທີ່ດິນໂຮງງານ/ສາງເກັບເຄື່ອງປ່າຂອງດົງ ເປັນກໍາມະສິດຂອງ:................................................;
- ອາຄານໂຮງງານ/ເຕົາເຜົາຖ່ານ ເປັນກໍາມະສິດຂອງ:...................................................................

2. ທີ່ດິນຂອບເຂດໂຮງງານ/ສາງຕິດກັບ:
- ທິດເໜືອຕິດກັບດິນ:.............................. ຍາວ:..............ແມັດ, ຖັດໄປເປັນດິນ.........................;
- ທິດໃຕ້ຕິດກັບດິນ:................................. ຍາວ:..............ແມັດ, ຖັດໄປເປັນດິນ.........................;
- ທິດຕາເວັນອອກຕິດກັບດິນ:..................... ຍາວ:..............ແມັດ, ຖັດໄປເປັນດິນ.........................;
- ທິດຕາເວັນຕົກຕິດກັບດິນ:...................... ຍາວ:...............ແມັດ, ຖັດໄປເປັນດິນ.........................

3. ສະຖານທີ່ສຳຄັນຕັ້ງຢູ່ໃກ້ກັບໂຮງງານ/ສາງ:
- ໂຮງໝໍ:............................................. ໃກ້ປະມານ:...................................................ແມັດ;
- ໂຮງຮຽນ:.......................................... ໃກ້ປະມານ:...................................................ແມັດ;
- ວັດ/ບູຮານສະຖານ:............................... ໃກ້ປະມານ:...................................................ແມັດ;
- ສະຖານທີ່ລັດຖະການ:............................ ໃກ້ປະມານ:...................................................ແມັດ;
- ໝູ່ບ້ານ:............................................ ໃກ້ປະມານ:...................................................ແມັດ;
- ແມ່ນ້ຳ/ຄອງນ້ຳ:................................. ໃກ້ປະມານ:...................................................ແມັດ;
- ຖະໜົນ:............................................ ໃກ້ປະມານ:...................................................ແມັດ.

4. ອາຄານໂຮງງານ/ສາງເຄື່ອງປ່າຂອງດົງທີ່ມີຢູ່ເດີມ..........ຫຼັງ, ຈະກໍ່ສ້າງຂຶ້ນໃໝ່.........ຫຼັງ, ລວມ............ຫຼັງ ລັກສະນະຂອງອາຄານແຕ່ລະຫຼັງ.

| ຫຼັງທີ | ອາຄານ | ຈຳນວນ | ລວງສູງ x ລວງຍາວ x ລວງກວ້າງ | ໂຄງສ້າງເຮັດດ້ວຍ | ພື້ນເຮັດດ້ວຍ | ຝາເຮັດດ້ວຍ | ເພດານເຮັດດ້ວຍ | ຫຼັງຄາເຮັດດ້ວຍ |
|---|---|---|---|---|---|---|---|---|
| 1 | ......... | ......... | ......... | ......... | ......... | ......... | ......... | ......... |
| 2 | ......... | ......... | ......... | ......... | ......... | ......... | ......... | ......... |
| 3 | ......... | ......... | ......... | ......... | ......... | ......... | ......... | ......... |

## III. ຄາດຄະເນເຄື່ອນໄຫວການຜະລິດ

ຈຳນວນ:..........ຜຽນວຽນ, ຜຽນທີ 1: ແຕ່............ຫາ............ໂມງ, ຜຽນທີ 2: ແຕ່............ຫາ...........ໂມງ, ຜຽນທີ 3: ແຕ່...........ຫາ..........ໂມງ, ຈຳນວນວັນເຮັດວຽກຕໍ່ອາທິດ:...........ວັນ.

## IV. ປະເມີນມູນຄ່າລົງທຶນ

ກ. ທຶນທັງໝົດ: ...................................., ທຶນກູ້ຢືມ ຫຼື ທຶນປະກອບຮຸ້ນ:.........................................;

1. ທຶນຄົງທີ:................................. ປະກອບດ້ວຍ: ທີ່ດິນ:....................................................;
- ອາຄານ ແລະ ສິ່ງປຸກສ້າງ:.........................................................................................;
- ເຄື່ອງຈັກ, ອຸປະກອນ ແລະ ຄ່າຕິດຕັ້ງ:...........................................................................;
- ພາຫະນະ:..............................................................................................................

2. ທຶນໝູນວຽນ:.........................................................................................................

ຂ. ທຶນຈົດທະບຽນ:..........................................................................................................

## V. ຄາດຄະເນພະນັກງານ ລວມມີ:.........................ຄົນ.

## VI. ເຄື່ອງຈັກ (ຕາມບັນຊີເຄື່ອງຈັກ ທີ່ຄັດຕິດມາພ້ອມນີ້)

- ຈຳນວນເຄື່ອງຈັກ:.........................ເຄື່ອງ, ກຳລັງແຮງລວມ:..............................................ແຮງມ້າ;
- ເພີ່ມຈຳນວນເຄື່ອງຈັກ/ສາງ:......................ເຄື່ອງ, ກຳລັງແຮງລວມ:.......................................ແຮງມ້າ.

## VII. ວັດຖຸຕົ້ນຕໍ ຫຼື ສຳຮອງ ທີ່ໃຊ້ເຂົ້າໃນການຜະລິດ

| ລ/ດ | ຊື່ວັດຖຸດິບ | ຄາດຄະເນການນຳໃຊ້ວັດຖຸດິບຕໍ່ປີ | ແຫຼ່ງທີ່ມາວັດຖຸດິບ | | |
|---|---|---|---|---|---|
| | | | ພາຍໃນ | ຕ່າງປະເທດ | ແຫຼ່ງຂຸດຄົ້ນ |
| | | | | | |
| | | | | | |

**VIII. ຜະລິດຕະພັນວັດຖຸສຳຮອງ (ຖ້າມີ)**

| ລ/ດ | ຊື່ຜະລິດຕະພັນ | ຄາດຄະເນຜະລິດຕະພັນຕໍ່ປີ | ເປົ້າໝາຍຈຳໜ່າຍ | |
|---|---|---|---|---|
| | | | ພາຍໃນ | ຕ່າງປະເທດ |
| | | | | |
| | | | | |

**IX. ຄາດຄະເນເວລາສຳລັບການສ້າງຕັ້ງ ແລະ ທົດລອງການຜະລິດຂອງໂຮງງານ/ສາງເກັບເຄື່ອງປ່າຂອງດົງ**

- ໄລຍະທີໜຶ່ງ: ກໍ່ສ້າງອາຄານໂຮງງານ/ສາງ:.........................ເດືອນ;
- ໄລຍະທີສອງ: ຕິດຕັ້ງເຄື່ອງຈັກ ແລະ ລະບົບເຕັກນິກໂຮງງານ/ສາງ.......................ເດືອນ;
- ໄລຍະທີສາມ: ທົດລອງການຜະລິດ..............................ເດືອນ.

**X. ບັນດາສະພາບແວດລ້ອມໂຮງງານ/ສາງ**

